# TOR for Outsourcing Driver Service 190 people




NNN Building 4th Floor/Room No. D5, Boulichan Road, Phonsinouan Village,
Sisattanark District, Vientiane Capital, Lao PDR.
Tel: + 856 21 223911, 222315, 222482, 219381
Fax: + 856 21 222089

Phonchanh Office, Hongsa District, Xayaboury Province, Lao PDR.
Tel: + 856 74 266121 – 29
Fax: + 856 74 266120

HONGSA POWER

## TOR for Outsourcing Driver Service

1. **ຄວາມເປັນມາ**

ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຖືກສ້າງຕັ້ງຂຶ້ນໃນປີ 2009 ໂດຍ ບໍລິສັດ ບ້ານປູ ພາເວີ ຈຳກັດ (BPP), ບໍລິສັດຜະລິດໄຟຟ້າ ລາດຊະບູລີ ໂຮນດິ້ງຈຳກັດ (RATCH), ແລະ ລັດວິສາຫະກິດຖືຮຸ້ນລາວ (LHSE) ແລະ ດຳເນີນງານການຜະລິດໄຟຟ້າຂາຍ ມີກຳລັງການຜະລິດກະແສໄຟຟ້າໄດ້ 1.878 MW ໂດຍທົ່ວໄປເອີ້ນວ່າ "ໂຮງໄຟຟ້າພະລັງງານຄວາມຮ້ອນຫົງສາ". ໂຮງໄຟຟ້າພະລັງງານຄວາມຮ້ອນຫົງສາ ເປັນໂຮງໄຟຟ້າທີ່ມີກຳລັງການຜະລິດກະແສໄຟຟ້າໄດ້ສູງສຸດຂອງ ສປປ ລາວ ເພື່ອສະໜອງພະລັງງານໄຟຟ້າໃຫ້ແກ່ສອງປະເທດ ໄດ້ແກ່ ສປປ ລາວ ແລະ ປະເທດໄທ

**2. ວັດຖຸປະສົງ**

ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ມີຈຸດປະສົງເພື່ອຈັດຈ້າງຜູ້ໃຫ້ບໍລິການພະນັກງານຂັບລົດຈຳນວນ190 ຄົນ ເຊິ່ງໃຫ້ບໍລິການດັ່ງນີ້:

**2.1** ພະນັກງານຂັບລົດປະຈຳສຳນັກງານບໍລິສັດ ໄຟຟ້າ ຫົງສາ ຈຳກັດ (ເມືອງຫົງສາ) ຈຳນວນ 170 ຄົນ

**2.2** ພະນັກງານຂັບລົດຕູ້ປະຈຳສຳນັກງານບໍລິສັດ ໄຟຟ້າ ຫົງສາ ຈຳກັດ (ເມືອງຫົງສາ) ຈຳນວນ 19 ຄົນ

**2.3** ພະນັກງານຂັບລົດປະຈຳສຳນັກງານໃຫຍ່ບໍລິສັດ ໄຟຟ້າ ຫົງສາ ຈຳກັດ (ນະຄອນຫຼວງວຽງຈັນ) ຈຳນວນ 1 ຄົນ.

ເພື່ອປະຕິບັດວຽກຂັບລົດ ສະໜອງວຽກງານຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ສຳຫຼັບພະນັກງານຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ແລະບຸກຄົນພາຍນອກທີ່ຕິດຕໍ່ວຽກງານກັບ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ.

3. **ຄຸນສົມບັດຜູ້ສະເໜີລາຄາ**

**3.1** ຜູ້ສະເໜີລາຄາຕ້ອງເປັນນິຕິບຸກຄົນ ຂອງສປປ ລາວ ເທົ່ານັ້ນ ເຊິ່ງ ມີວັດຖຸປະສົງໃນການໃຫ້ບໍລິການ ຫຼື ບໍລິຫານ ແລະ ຈັດການດ້ານແຮງງານ ຕາມທີກຳນົດໄວ້ໃບທະບຽນວິສາຫະກິດ ແລະ ຕາມກົດໝາຍຂອງ ສປປ ລາວ

**3.2** ຜູ້ສະເໜີລາຄາຈະຕ້ອງມີປະສົບການໃນການບໍລິຫານ ຫຼື ເຮັດວຽກດ້ານບໍລິການ ຫຼື ການຈັດຫາດ້ານແຮງງານ ຫຼື ຈັດການພະນັກງານຂັບລົດໃຫ້ບໍລິການ ບໍ່ນ້ອຍກວ່າ 1 ປີ.

**3.3** ບໍ່ເຄີຍຖືກຍົກເລີກສັນຍາ ກະທຳການໃດໆ ທີ່ເປັນການລະເມີດສັນຍາ ຫຼື ຕົກເກນການປະເມີນຜົນງານກັບບໍລິສັດ ໄຟຟ້າ ຫົງສາ ຈຳກັດ ແລະ/ຫຼື ບໍ່ເຄີຍຕິດ Blacklist ຂອງ ບໍລິສັດ

ໄຟຟ້າ ຫົງສາ ຈຳກັດ ລວມເຖິງບຸກຄະລາກອນ ອັນໄດ້ແກ່ ເຈົ້າຂອງ, ຜູ້ຖືຮຸ້ນ, ກຳມະການ ບໍລິຫານ ແລະ ຜູ້ຈັດການ ທີ່ເຄີຍກໍ່ໃຫ້ເກີດຄວາມເສຍຫາຍ ແລະ/ຫຼື ຮ່ວມກະທຳຜິດສັນຍາ

**3.4** ມີທຶນຈົດທະບຽນບໍ່ນ້ອຍກວ່າ 1,000,000 ບາດ (ໜຶ່ງລ້ານບາດ) ຫຼື 700.000.000 ກີບ ( ເຈັດຮ້ອຍລ້ານກີບ).

**3.5** ຜູ້ສະເໜີລາຄາຕ້ອງບໍ່ແມ່ນພະນັກງານ ຫຼື ມີຄວາມສຳພັນຕາມກົດໝາຍກັບຄະນະ ກຳມະການຈັດຊື້ ຫຼື ຜູ້ທີ່ກ່ຽວຂ້ອງກັບການປະມູນຄັ້ງນີ້ ຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ.

**3.6** ຜູ້ສະເໜີລາຄາຕ້ອງບໍ່ເປັນຜູ້ມີຜົນປະໂຫຍດຮ່ວມກັນກັບຜູ້ສະເໜີລາຄາລາຍອື່ນ ຫຼື ບໍ່ ເປັນຜູ້ກະທຳການອັນເປັນການຂັດຂວາງການແຂ່ງຂັນການປະມູນໃນຄັ້ງນີ້.

**3.7** ຜູ້ສະເໜີລາຄາຕ້ອງມີເງິນໝູນວຽນໃນທະນາຄານບໍ່ນ້ອຍກວ່າ 1,000,000 ບາດ (ໜຶ່ງ ລ້ານບາດ) ຫຼື 700.000.000 ກີບ ( ເຈັດຮ້ອຍລ້ານກີບ) ມີໄລຍະເວລາບໍ່ນ້ອຍກວ່າ 1 ປີ ນັບ ຈາກວັນທີ່ສະເໜີລາຄາ ແລະ ຕ້ອງເປັນບັນຊີຂອງຜູ້ສະເໜີລາຄາເທົ່ານັ້ນ.

**3.8** ຜູ້ສະເໜີລາຄາ ຕ້ອງມາຮັບຟັງເງື່ອນໄຂຂອບເຂດຂອງງານ (Terms of Reference: TOR) ໃນວັນ…05 /10 / 26.

**3.9** ຜູ້ສະເໜີລາຄາຕ້ອງມານຳສະເໜີແຜນງານ ແລະ ການບໍລິຫານງານ ໃນວັນທີ 26/10 /26 ຕາມການນັດໝາຍກັບ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ.

**3.10** ຜູ້ສະເໜີລາຄາຕ້ອງນຳສະເໜີຂໍ້ມູນດ້ານເຕັກນິກ ແລະ ລາຄາ ກັບ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ວັນທີ 31/10/26 ຕາມລະບຸໃນຂໍ້ 5.1.1 (ສາມາດເຮັດໄດ້ແບບສື່ອອງການປະມຸນ ໄດ້ທີ່ສຳນັກງານໂພນຈັນ On Site).

## 4. ເກນການພິຈາລະນາຄັດເລືອກ

ຄະນະກຳມະການຈັດຊື້ ຈັດຈ້າງ ຈະເປີດຊອງຂໍ້ສະເໜີ ແລະ ພິຈາລະນາຂໍ້ສະເໜີທາງດ້ານເຕັກນິກ ແລະ ລາຄາ ດັ່ງນີ້:

ຖ້າຫາກຜູ້ສະເໜີລາຄາຄົນໃດມີຄຸນສົມບັດບໍ່ຖືກຕ້ອງ ຕາມທີ່ກຳນັດໃນຂໍ້ 3 ຫຼື ຍື່ນ ເອກະສານການສະເໜີລາຄາບໍ່ຖືກຕ້ອງ ຫຼື ບໍ່ຄົບ ຕາມຂໍ້ 5 ຄະນະກຳມະການຈັດຊື້ ຈັດຈ້າງຈະບໍ່ ພິຈາລະນາຂໍ້ສະເໜີຂອງຜູ້ສະເໜີລາຄາຄົນນັ້ນ ຍົກເວັ້ນຂໍ້ຜິດພາດທີ່ບໍ່ແມ່ນສາລະສຳຄັນ.

ຜູ້ສະເໜີລາຄາ ຕ້ອງບໍ່ສະເໜີລາຍລະອຽດແຕກຕ່າງຈາກເງື່ອນໄຂທີ່ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ກຳນົດໃນສ່ວນທີ່ສຳຄັນ ຫຼື ມີຜົນໃຫ້ເກີດການໄດ້ປຽບ ຫຼື ເສຍປຽບ ລະຫວ່າງຜູ້ສະເໜີລາຄາ ຄົນອື່ນ.

ໃນການຕັດສິນການປະມູນ ຫຼື ໃນການເຮັດສັນຍາ ຄະນະກຳມະການຈັດຊື້ ຈັດຈ້າງ ມີສິດໃຫ້ ຜູ້ສະເໜີລາຄາ ອະທິບາຍ ຫຼື ຊີ້ແຈງ ຕາມຄວາມຈິງ, ສະພາບ, ສະຖານະ ຫຼື ຄວາມຈິງອື່ນໆ ທີ່ ກ່ຽວຂ້ອງກັບຜູ້ສະເໜີລາຄາ ຖ້າຫາກຜູ້ສະເໜີລາຄາບໍ່ສາມາດອະທິບາຍເຫດຜົນ, ບໍ່ສາມາດ

ປະຕິບັດຕາມທີ່ສະເໜີໄດ້ ຫຼື ຫຼັກຖານດັ່ງກ່າວບໍ່ເໝາະສົມ ຫຼື ບໍ່ພຽງພໍ ຫຼື ບໍ່ຖືກຕ້ອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຈະບໍ່ຮັບລາຄາ ແລະ ບໍ່ເຮັດສັນຍາ ກັບຜູ້ສະເໜີລາຄາ.

ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຂໍສະຫງວນສິດຍົກເລີກການປະມູນ ຫຼື ບໍ່ຮັບພິຈາລະນາຈັດຈ້າງ ອີງຕາມການພິຈາລະນາຂອງຄະນະກຳມະການຈັດຊື້ຈັດຈ້າງ ໂດຍພິຈາລະນາຈາກຜົນປະໂຫຍດ ຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ເປັນຫຼັກ ແລະ ຖືວ່າການຕັດສິນໃຈຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ເປັນເດັດຂາດ ຜູ້ສະເໜີລາຄາບໍ່ມີສິດຮຽກຮ້ອງຄ່າເສຍຫາຍກັບ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ.

**5. ການສະເໜີລາຄາ**

ຜູ້ສະເໜີລາຄາ ຕ້ອງຍື່ນຊອງປະມູນຈຳນວນ 3 ຊອງຄື: ຊອງທາງດ້ານເຕັກນິກ 1 ຊອງ, ຊອງສະເໜີລາຄາ 1 ຊອງ ແລະ ຊອງໜັງສືຄ້ຳປະກັນການເຂົ້າປະມູນ (Bid Bond) 1 ຊອງ.

5.1 **ຊອງເຕັກນິກ**

5.1.1 ລາຍລະອຽດ ແລະ ປະຫວັດການທຳງານຂອງບໍລິສັດ (Company Profile) ແລະ ໃຫ້ຄັດຕິດເອກະສານອ້າງອີງ ໄດ້ແກ່ ວຽກງານການບໍລິຫານການໃຫ້ບໍລິການຄົນຂັບລົດ ຫຼື ວຽກງານໃຫ້ບໍລິການພະນັກງານ 1 ປີຂຶ້ນໄປ.

5.1.2 ໃບທະບຽນວິສາຫະກິດ ແລະ ວັດຖຸປະສົງການດຳເນີນກິດຈະການ.

5.1.3 ໃບຢັ້ງຢືນການຈົດທະບຽນອາກອນ ຫຼື ໃບຢັ້ງຢືນການມອບເລກປະຈຳຕົວຜູ້ເສຍອາກອນ ຫຼື ໃບຢັ້ງຢືນການມອບພັນທະອາກອນ

5.3 ໃບຢັ້ງຢືນການມອບອຳນາດ (ຖ້າມີ).

5.4 ແຜນຜັງບຸກຄະລາກອນ, ຜັງການບໍລິຫານ ແລະ ຜັງການຕິດຕໍ່ປະສານງານທັງໝົດ ພ້ອມ CV ຂອງພະນັກງານທີ່ປະຈຳຢູ່ສຳນັກງານຫົງສາສຳຫຼັບງານປະມູນຄັ້ງນີ້ ທຸກຕຳແໜ່ງບຸກຄະລາກອນ ຕ້ອງບໍ່ຊ້ຳກັບວຽກງານສັນຍາ ຫຼື Project ອື່ນໆ

5.5 ແຜນການບໍລິຫານງານ ແລະ ແຜນການຝຶກອົບຮົມພະນັກງານຂັບລົດ ຢ່າງໜ້ອຍປີລະ 4 ຫົວຂໍ້

ຕະຫຼອດໄລຍະເວລາສັນຍາ ຕາມລາຍລະອຽດ ຂໍ້ 8.9

ໝາຍເຫດ: ແຜນງານທີ່ນຳສະເໜີ ຈະຕ້ອງນຳໄປລະບຸໃນລາຍລະອຽດຂອງໃບສະເໜີລາຄາ ແລະ ມີການນຳໃຊ້ຢ່າງມີປະສິດທິພາບ. ຖ້າແຜນໃດບໍ່ມີການນຳໃຊ້ຕະຫຼອດອາຍຸສັນຍາ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຂອງສະຫງວນສິດໃນການຫັກເງິນຄ່າໃຊ້ຈ່າຍໃນລາຍການນັ້ນໆ

5.6 ຫຼັກຖານດ້ານການເງິນ (Bank statement) ຍ້ອນຫຼັງຈາກວັນທີສະເໜີລາຄາ 1 ປີ ຫຼື ໜັງສືສະໜັບສະໜູນທາງດ້ານການເງິນຈາກທະນາຄານທຸລະກິດ.

5.7 ເອກະສານ Certification ISO 9001, ISO 14001 ,ISO 45001 ຫຼື OHSAS 18001 ຂອງຜູ້ສະເໜີລາຄາ (ຖ້າມີ).

5.8 ເອກະສານຂັ້ນປະຕິບັດ ຫຼືນະໂຍບາຍ ຄວາມປອດໄພ ອາຊີວະອານາໄມ ຄວາມປອດໄພ ແລະ ສິ່ງແວດລ້ອມ

## 5.2 ຊອງລາຄາ

ລາຄາທີ່ສະເໜີຕ້ອງເປັນສະກຸນເງິນບາດ (THB) ຕາມເງື່ອນໄຂທີ່ກຳນົດໄວ້

ເງິນຄ່າຈ້າງທີ່ສະເໜີ ຫຼື ເຮັດສັນຍາ ບໍ່ລວມຄ່າລ່ວງເວລາ ຄ່າເບ້ຍລ້ຽງ ຄ່າທີ່ພັກຂອງພະນັກງານຂັບລົດ ໃນກໍລະນີປະຕິບັດວຽກຕ່າງແຂວງ.

ຜູ້ສະເໜີລາຄາ ຈະຕ້ອງສະແດງລາຍລະອຽດຕົ້ນທຶນ ແລະ ຄ່າໃຊ້ຈ່າຍຢ່າງໜ້ອຍ ດັ່ງຕໍ່ໄປນີ້

5.2.1 ຄ່າປະກັນອຸບັດເຫດສ່ວນບຸກຄົນ

5.2.2 ຄ່າກວດສຸຂະພາບປະຈຳປີ

5.2.3 ຄ່າຝຶກອົບຮົມພະນັກງານ ຢ່າງໜ້ອຍ 4 ຫົວຂໍ້ຕໍ່ປີ

5.2.4 ຄ່າເຄື່ອງແບບພະນັກງານ

5.2.5 ຄ່າລົດຮັບ–ສົ່ງພະນັກງານຂັບລົດ

5.2.6 ຄ່າໃຊ້ຈ່າຍບຸກຄະລາກອນປະຈຳໂຄງການ

5.2.7 ຄ່າໃຊ້ຈ່າຍອື່ນໆ ທີ່ກ່ຽວຂ້ອງກັບການດຳເນີນງານ ເຊັ່ນ ຄ່າກິດຈະກຳສຳລັບພະນັກງານ, ຄ່ານ້ຳດື່ມ ແລະ ສະຫວັດດີການພື້ນຖານອື່ນໆ

### 5.3 ໜັງສືຄ້ຳປະກັນການປະມູນ (Bid Bond)

ມູນຄ່າຫຼັກປະກັນ: 500,000 ບາດ ຫຼື 350,000,000 ກີບ ໂດຍຕ້ອງມີອາຍຸຕັ້ງແຕ່ວັນຍື່ນຊອງປະມູນຈົນເຖິງວັນທີ 30 ເມສາ 2027.

## 6. ໄລຍະເວລາການຈ້າງ

ໄລຍະເວລາການຈ້າງ: 3 ປີ ເລີ່ມຕັ້ງແຕ່ ວັນທີ 1 ມິຖຸນາ 2027 ເຖິງ ວັນທີ 31 ພຶດສະພາ 2030.

## 7. ຫຼັກປະກັນ

ຫຼັກປະກັນສັນຍາ: ຜູ້ຮັບເໝົາຕ້ອງຈັດຫາຫຼັກປະກັນສັນຍາ ໃນວົງເງິນ 10% ຂອງມູນຄ່າສັນຍາ ໃນຮູບແບບຫຼັກປະກັນທີ່ອອກໃຫ້ໂດຍທະນາຄານການຄ້າຕ່າງປະເທດ ຫຼື ທະນາຄານພັດທະນາລາວເທົ່ານັ້ນ (ບໍ່ຮັບເງິນສົດ ຫຼື ແຊັກເງິນສົດ). ຫຼັກປະກັນຕ້ອງມີຜົນບັງຄັບໃຊ້ຕັ້ງແຕ່ ວັນທີ 1 ມິຖຸນາ 2027 ຫາ ວັນທີ 30 ມິຖຸນາ 2030 ແລະ ຕ້ອງຍື່ນໃຫ້ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ກ່ອນວັນທີ່ສັນຍາເລີ່ມມີຜົນບັງຄັບໃຊ້.

HONGSA POWER

ສົນໃຈເຂົ້າຮ່ວມງານປະມູນສາມາດເບິ່ງລາຍລະອຽດເພີ່ມເຕີມໄດ້ທີ່ www.hongsapower.com ຫຼື ຕິດຕໍ່ສອບຖາມ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ

Ms. Phannipa Kiatbumrung (ຜູ້ຈັດການຝ່າຍຈັດຊື້)

Telephone Number: +856-20-52441802

Tel: +856(0)74266121-4 EXT. 1117

E-mail address: phannipa_k@hongsapower.com

HONGSA POWER

**ຂອບເຂດວຽກງານ (Scope of Work)**

**ໜ້າທີ່ຂອງຜູ້ສະເໜີລາຄາ**

1. ຜູ້ສະເໜີລາຄາ ຕ້ອງຈັດສົ່ງລາຍຊື່ພະນັກງານຂັບລົດໃຫ້ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ເພື່ອມາທົດສອບຄຸນສົມບັດ ແລະ ຄວາມສາມາດໃນການຂັບລົດ ຕາມເກນກຳນົດຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ພາຍໃນ 30 ວັນ ຫຼັງຈາກເຊັນສັນຍາຈ້າງ ຖ້າພະນັກງານຂັບລົດບໍ່ຜ່ານການທົດສອບ ຜູ້ສະເໜີລາຄາຕ້ອງຈັດສົ່ງພະນັກງານຂັບລົດຄົນໃຫມ່ມາທົດສອບ ເພື່ອໃຫ້ຜ່ານການທົດສອບຕາມຈຳນວນຄົນ 190 ຄົນ.

2. ຜູ້ສະເໜີລາຄາ ຕ້ອງຈັດຫາພະນັກງານຂັບລົດ ທີ່ມີຄຸນສົມບັດ ແລະ ເອກະສານປະກອບຕາມທີ່ກຳນົດ.

2.1 ສັນຊາດລາວ.

2.2 ອາຍຸຕັ້ງແຕ່ 20 ປີຂື້ນໄປແຕ່ບໍ່ເກີນ 60 ປີ

(ຫາກກວດສອບແລ້ວພົບວ່າພະນັກງານຂັບລົດມີຄຸນສົມບັດບໍ່ກົງຕາມເກນອາຍຸທີ່ກຳນົດ ໃຫ້ຜູ້ສະເໜີລາຄາລະງັບການປະຕິບັດວຽກ ແລະ ຈັດຫາຄົນມາປ່ຽນແທນທັນທີ ຫາກບໍ່ສາມາດຈັດຫາຄົນມາທົດແທນໄດ້ ໃຫ້ພິຈາລະນາຕາມບົດບັບໃໝ ແລະ ຜູ້ສະເໜີລາຄາຈະຕ້ອງຖືກລົງໂທດຕາມສັນຍາ)ຈຳນວນ 190 ຄົນ ຕາມຄວາມຕ້ອງການຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ໂດຍ ຜູ້ສະເໜີລາຄາຕ້ອງດຳເນີນການຈັດສົ່ງເອກະສານຂອງພະນັກງານຂັບລົດ ໃຫ້ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ກ່ອນວັນທີຈະເລີ່ມສັນຍາຈ້າງ 30 ວັນ ດັ່ງນີ້:

2.3 ປະຫວັດພະນັກງານຂັບລົດພ້ອມທັງລະບຸທີ່ຢູ່ແລະເບີໂທລະສັບທີ່ສາມາດຕິດຕໍ່ໄດ້;

2.4 ສຳເນົາໃບອະນຸຍາດຂັບຂີ່ ຕາມປະເພດການຂັບຂີ່ທີ່ກົດໝາຍກຳນົດ

2.4.1 ຜູ້ຂັບລົດຕູ້ ຕ້ອງມີໃບຂັບຂີ່ປະເພດ ຫ້ອງ D

2.4.2 ຜູ້ຂັບລົດເບົາ ຕ້ອງມີໃບຂັບຂີ່ປະເພດ ຫ້ອງ B

2.5 ສຳເນົາບັດປະຈຳຕົວ;

2.6 ສຳເນົາສຳມະໂນຄົວ;

2.7 ໃບຮັບຮອງແພດການກວດຮ່າງກາຍຂັ້ນພື້ນຖານ;ຈະຕ້ອງມີຜົນການກວດສຸຂະພາບມາຈາກສະຖານພະຍາບານທີ່ລັດຮັບຮອງ ໃຫ້ກັບພະນັກງານ ຕາມກົດໝາຍແຫ່ງ ສປປ ລາວ

NNN Building 4th Floor/Room No. D5, Boulichan Road, Phonsinouan Village, Sisattanark District, Vientiane Capital, Lao PDR.
Tel: + 856 21 223911, 222315, 222482, 219381
Fax: + 856 21 222089

Phonchanh Office, Hongsa District, Xayaboury Province, Lao PDR.
Tel: + 856 74 266121 – 29
Fax: + 856 74 266120

2.8 ໃບແຈ້ງໂທດ.

3. ຜູ້ສະເໜີລາຄາຈະຕ້ອງຈັດຫາພະນັກງານຂັບລົດທີ່ສາມາດຂັບລົດເກຍທຳມະດາ ຫຼື ເກຍອັດຕະໂນມັດໄດ້.

4. ຜູ້ສະເໜີລາຄາຕ້ອງຈັດຫາພະນັກງານຂັບລົດທີ່ມີໃບອະນຸຍາດຂັບຂີ່ທີ່ຍັງບໍ່ໝົດອາຍຸ ແລະ ມີອາຍຸການນຳໃຊ້ຄົງເຫຼືອບໍ່ນ້ອຍກວ່າ 6 ເດືອນ ນັບຈາກວັນທີ່ເລີ່ມປະຕິບັດງານ.

5. ໃນກໍລະນີທີ່ພະນັກງານຂັບລົດຂອງຜູ້ສະເໜີລາຄາບໍ່ມາປະຕິບັດວຽກ ບໍ່ວ່າດ້ວຍເຫດໃດໆ ຜູ້ສະເໜີລາຄາຕ້ອງສົ່ງພະນັກງານຂັບລົດມາແທນພະນັກງານຂັບລົດຄົນດັ່ງກ່າວພາຍໃນບໍ່ເກີນໄລຍະເວລາ 9 ໂມງ ຂອງວັນນັ້ນໆ ຫຼື ບໍ່ເກີນ 2 ຊົ່ວໂມງ ຫຼັງຈາກໄດ້ຮັບແຈ້ງຈາກຜູ້ຄວບຄຸມລົດຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ເຊິ່ງພະນັກງານຂັບລົດມາແທນຕ້ອງມີຄຸນສົມບັດຕາມທີ່ກຳນົດໃນຂໍ້ 2.1-2.4.

6. ຜູ້ສະເໜີລາຄາຕ້ອງຈັດໃຫ້ມີບຸກຄະລາກອນຢູ່ປະຈຳໂຄງການໄຟຟ້າຫົງສາ ຕະຫຼອດເວລາ ອັນໄດ້ແກ່ ຜູ້ຈັດການ, ແລະ ບຸກຄະລາກອນດູແລລະບົບການບໍລິຫານສັນຍາທີ່ພຽງພໍ ເພື່ອຮອງຮັບການໃຫ້ບໍລິການພະນັກງານຂັບລົດໃຫ້ແກ່ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຢ່າງມີປະສິດທິພາບແລະຕ້ອງບໍ່ຊໍ້າກັບສັນຍາ ຫຼື Project ອື່ນໆ ໂດຍຢ່າງນ້ອຍຕ້ອງສາມາດດຳເນີນງານດັ່ງນີ້:

**6.1 ການບໍລິຫານ ແລະ ຄວບຄຸມການປະຕິບັດງານ**

6.1.1 ຄວບຄຸມ ແລະ ບໍລິຫານການໃຫ້ບໍລິການພະນັກງານຂັບລົດໃຫ້ເປັນໄປຕາມສັນຍາ ແລະ KPI/SLA ທີ່ກຳນົດ

6.1.2 ປະສານງານ ແລະ ແກ້ໄຂບັນຫາການປະຕິບັດງານໃນແຕ່ລະວັນໄດ້ຢ່າງທັນເວລາ

6.1.3 ຈັດການການຂາດວຽກ, ການມາວຽກຊ້າ ແລະ ການຈັດຫາກຳລັງຄົນທົດແທນໃຫ້ພຽງພໍ

6.1.4 ເປັນຜູ້ຕິດຕໍ່ຫຼັກ ໃນການປະສານງານລະຫວ່າງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ແລະ ຜູ້ສະເໜີລາຄາ

6.1.5 ຈັດທຳລາຍງານ ແລະ ສະຫຼຸບຜົນການດຳເນີນງານ ຕາມທີ່ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ກຳນົດ

6.1.6 ຈັດທຳ Invoice ແລະ ເອກະສານປະກອບການວາງບິນ ໃຫ້ຖືກຕ້ອງ ແລະ ທັນເວລາ

6.1.7 ຄວບຄຸມ ແລະ ຈັດການເອກະສານການເບີກຈ່າຍທີ່ກ່ຽວຂ້ອງ

6.1.8 ຮັບ ແລະ ຖ່າຍທອດຂໍ້ມູນ, ຄໍາສັ່ງງານ ແລະ ແຜນວຽກ ຈາກ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ໃຫ້ຜູ້ປະຕິບັດງານຮັບຊາບຢ່າງຖືກຕ້ອງ

6.1.9 ຕິດຕາມ ແລະ ປະສານງານການຈັດສົ່ງພະນັກງານຂັບລົດໃຫ້ພຽງພໍຕາມຄວາມຕ້ອງການ

ຮອງຮັບການປະສານງານນອກເວລາ ສໍາລັບກໍລະນີສຸກເສີນ ຫຼື ການປັບປ່ຽນແຜນງານ

6.1.10 ບໍລິຫານຂໍ້ມູນພະນັກງານຂັບລົດໃຫ້ຖືກຕ້ອງ ແລະ ເປັນປັດຈຸບັນ

6.1.11 ຈັດຫາ, ຄັດເລືອກ ແລະ ຈັດສັນພະນັກງານຂັບລົດໃຫ້ພຽງພໍຕາມສັນຍາ

6.1.12 ຈັດຫາພະນັກງານສໍາຮອງທົດແທນໃນກໍລະນີຂາດວຽກ, ລາພັກ, ລາອອກ ຫຼື ບໍ່ສາມາດປະຈໍາໜ້າທີ່ໄດ້

6.1.13 ຄວບຄຸມການປະຕິບັດຕາມກົດໝາຍແຮງງານ ແລະ ສິດທິປະໂຫຍດຂອງພະນັກງານ

6.1.14 ຈັດໃຫ້ມີແຜນການຝຶກອົບຮົມ, ພັດທະນາທັກສະ ແລະ ປະເມີນສົມັດຖະນະຂອງພະນັກງານຂັບລົດຢ່າງຕໍ່ເນື່ອງ

**6.2 ການບໍລິຫານດ້ານຄວາມປອດໄພ**

6.2.1 ຄວບຄຸມ ແລະ ຕິດຕາມການປະຕິບັດຕາມກົດລະບຽບ SHEQ ແລະ ກົດຄວາມປອດໄພຂອງ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ

6.2.2 ກວດສອບ ແລະ ຮັກສາເອກະສານດ້ານຄວາມປອດໄພ ຂອງພະນັກງານຂັບລົດໃຫ້ເປັນປັດຈຸບັນ

6.2.3 ດໍາເນີນການສືບສວນອຸບັດເຫດ ແລະ ຈັດທໍາລາຍງານພ້ອມມາດຕະການແກ້ໄຂປ້ອງກັນ

6.2.4 ປະສານງານດ້ານປະກັນໄພ ແລະ ການຈັດການເຫດສຸກເສີນຈົນສໍາເລັດຂະບວນການ

6.2.5 ຈັດໃຫ້ມີການອົບຮົມ ແລະ ການຮັບນະລຶງດ້ານຄວາມປອດໄພແກ່ພະນັກງານຂັບລົດ

6.2.6 ຈັດໃຫ້ມີການຝຶກອົບຮົມ, ທົບທວນ ແລະ ພັດທະນາທັກສະການຂັບຂີ່ປອດໄພຂອງພະນັກງານຂັບລົດຢ່າງສະໜ່ຳສະເໝີ ເພື່ອຫຼຸດຄວາມສ່ຽງ ແລະ ປ້ອງກັນອຸບັດເຫດ.

6.2.7 ສ້າງຈິດສຳນຶກ ແລະ ສົ່ງເສີມວັດທະນະທຳດ້ານຄວາມປອດໄພໃຫ້ແກ່ພະນັກງານຂັບລົດ ຜ່ານການສື່ສານ, ກິດຈະກຳ, ການອົບຮົມ ແລະ ການນຳໃຊ້ບົດຮຽນຈາກອຸບັດເຫດ ແລະ ເຫດການເກືອບພາດ (Near Miss).

6.2.8 ເມື່ອເກີດອຸບັດເຫດ ຫຼື ເຫດການສຸກເສີນທີ່ກ່ຽວຂ້ອງກັບພະນັກງານຂັບລົດ ຜູ້ສະເໜີລາຄາຕ້ອງຈັດໃຫ້ມີຜູ້ຮັບຜິດຊອບເຂົ້າໄປຍັງຈຸດເກີດເຫດໂດຍໄວ ເພື່ອຄວບຄຸມສະຖານະການ, ໃຫ້ການຊ່ວຍເຫຼືອ, ສອບສວນຫາສາເຫດ ແລະ ປະສານງານກັບຜູ້ທີ່ກ່ຽວຂ້ອງ.

6.2.9 ຜູ້ສະເໜີລາຄາຕ້ອງສາມາດຮອງຮັບ ແລະ ເຂົ້າຈັດການເຫດການອຸບັດເຫດໄດ້ຕະຫຼອດ 24 ຊົ່ວໂມງ ລວມເຖິງວັນພັກ, ນອກເວລາເຮັດວຽກ ແລະ ນອກເຂດພື້ນທີ່ປະຕິບັດງານ ໂດຍບໍ່ໃຫ້ມີຜົນກະທົບຕໍ່ການສືບສວນ ແລະ ການຈັດການເຫດການ.

**6.3 ການຄວບຄຸມ ແລະ ບຳລຸງຮັກສາລົດ**

6.3.1 ກຳກັບ ແລະ ຕິດຕາມການບຳລຸງຮັກສາລົດທຸກຄັນ ໃຫ້ມີສະພາບພ້ອມໃຊ້ງານຕະຫຼອດເວລາ

6.3.2 ກວດສອບ ແລະ ວິເຄາະສາເຫດການຂັດຂ້ອງຂອງລົດ

6.3.3 ປະສານງານການສ້ອມແປງ ແລະ ການບຳລຸງຮັກສາໃຫ້ເກີດຂຶ້ນໃນເວລາທີ່ກຳນົດ

6.3.5 ແກ້ໄຂບັນຫາສຸກເສີນຂອງລົດ ທັງໃນ ແລະ ນອກເວລາເຮັດວຽກ

6.3.6 ຈັດອົບຮົມ ຫຼື ໃຫ້ຄຳແນະນຳການດູແລລົດ ແກ່ພະນັກງານຂັບລົດ

6.4 **ຄຸນສົມບັດຂອງແຕ່ລະຕຳແໜ່ງ**

6.4.1 ຜູ້ຈັດການປະຈຳຫ້ອງການສຳນັກງານທີ່ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ

(i)ມີປະສົບການດ້ານການບໍລິຫານຫ້ອງການ ຫຼື ການຈັດການທີມງານ ຢ່າງນ້ອຍ 3–5 ປີ

(ii)ສາມາດນຳພາທີມງານ, ແກ້ໄຂບັນຫາ ແລະ ຕັດສິນໃຈໄດ້ຢ່າງວ່ອງໄວ ແລະ ທັນເວລາ

(iii)ມີທັກສະການສື່ສານທີ່ດີ ທັງພາຍໃນ ແລະ ພາຍນອກອົງກອນ

(iv)ມີຄວາມຮັບຜິດຊອບສູງ, ຊື່ສັດ, ມີວິໄນ ແລະ ສາມາດເຮັດວຽກພາຍໃຕ້ຄວາມກົດດັນໄດ້

(v)ປະສົບການເຮັດວຽກດ້ານວຽກງານບຸກຄົນ (HR)

(vi)ມີຄວາມຮູ້ກ່ຽວກັບ ກົດໝາຍແຮງງານ, ລະບຽບວິໄນ ແລະ ສັນຍາຈ້າງງານ

(vii) ເບິ່ງແຍງດ້ານການຂາດວຽກ, ການຈັດພະນັກງານທົດແທນ

**6.4.2 ພະນັກງານຝ່າຍ ຄວາມປອດໄພ**

(i)ມີປະສົບການເຮັດວຽກດ້ານ ວຽກຄວາມປອດໄພ ຢ່າງນ້ອຍ 1–3 ປີ ວຸດທິການສຶກສາ ໃບປະກາດຊັ້ນສູງຂຶ້ນໄປ

(ii)ມີໃບປະກາດສະນີບັດການຝຶກອົບຮົມ ດ້ານເຈົ້າໜ້າທີ່ຄວາມປອດໄພ ລະດັບຈປ.ວິຊາຊີບ

(iii)ມີຄວາມຮູ້ ມີຄວາມເຂົ້າໃຈດ້ານຄວາມປອດໄພເປັນຢ່າງດີໃນການເຮັດວຽກ ໂດຍສະເພາະວຽກຂັບລົດ ແລະ ການເດີນທາງ

(iv)ສາມາດຄວບຄຸມ, ດູແລ ແລະ ຕິດຕາມການປະຕິບັດຕາມ ກົດລະບຽບຄວາມປອດໄພຂອງພະນັກງານຂັບລົດ

(v)ສາມາດອ່ານ ແລະ ຂຽນ ພາສາອັງກິດ

(vi)ມີຄວາມສາມາດດ້ານການນຳໃຊ້ຄອມພິວເຕີ ໂປຣແກຣມພື້ນຖານດ້ານ Word, Excel, Power Point

(vii)ສາມາດກວດສອບເອກະສານດ້ານຄວາມປອດໄພ ເຊັ່ນ ການອົບຮົມຂັບຂີ່ປອດໄພ, ການກວດສຸຂະພາບ, ໃບອະນຸຍາດຕ່າງໆ

(viii)ປະສານງານດ້ານການປະກັນໄພຈົນຈົບຂະບວນການ

(ix)ສາມາດສອບສວນ ແລະ ຫາສາເຫດຂອງອຸບັດເຫດໃນທຸກຄັ້ງ ພ້ອມທັງຫາວິທີການປ້ອງກັນຢ່າງມີປະສິດທິພາບ ແລະ ສາມາດຂຽນລາຍງານອຸບັດເຫດພ້ອມທັງມາດຕະການປ້ອງກັນອຸບັດເຫດໄດ້

**6.4.3 ຊ່າງເຕັກນິກ**

(i) ມີຄວາມຮູ້ເລື່ອງເຄື່ອງຈັກ ການສ້ອມແປງລົດ

(ii) ຕ້ອງມີປະສົບການທຳງານມາແລ້ວ ບໍ່ນ້ອຍກວ່າ 2 ປີ.

(iii) ສາມາດດູແລ ແລະ ບຳລຸງຮັກສາ ລົດຂອງ ບໍລິສັດ ໄຟຟ້າຫົງສາ ຈຳກັດ ໃຫ້ຢູ່ໃນສະພາບພ້ອມນຳໃຊ້ຢູ່ສະເໝີ

(iv) ສາມາດອອກໄປ ປະເມີນອາການລົດ ຫຼື ກວດສອບສາເຫດການຂັດຂ້ອງໄດ້

(v) ສາມາດເຂົ້າຊ່ອມລົດ ນອກເວລາເຮັດການ ແລະ ນອກສະຖານທີ່ ໃນກໍລະນີມີວຽກເຮັ່ງດ່ວນ

(vi) ສາມາດ ສອນ ແລະ ຈັດອົບຮົມ ໃຫ້ພະນັກງານຂັບລົດ ໃນການແກ້ໄຂບັນຫາເຄື່ອງຈັກເບື້ອງຕົ້ນ

(vii) ແນະນໍາວິທີການດູແລຮັກສາລົດເບື້ອງຕົ້ນ ເພື່ອຫຼຸດຜ່ອນຄວາມເສຍຫາຍ ແລະ ການເກີດອຸບັດຕິເຫດ

7. ຜູ້ສະເໜີລາຄາ ຕ້ອງດໍາເນີນການກວດສານເສບຕິດໃຫ້ແກ່ພະນັກງານຂັບລົດທຸກຄົນ ຢ່າງໜ້ອຍ 1 ຄັ້ງຕໍ່ປີ ໂດຍຕ້ອງມີອັດຕາການກວດຄົບຖ້ວນ 100% ຂອງຈໍານວນພະນັກງານຂັບລົດທັງໝົດ ແລະ ຕ້ອງສົ່ງລາຍງານຜົນການກວດໃຫ້ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ຮັບຊາບ

ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ສະຫງວນສິດໃນການສຸ່ມກວດສານເສບຕິດເພີ່ມເຕີມໄດ້ທຸກເວລາ ໂດຍບໍ່ຕ້ອງແຈ້ງໃຫ້ຊາບລ່ວງໜ້າ

8. ການຝຶກອົບຮົມ ແລະ ແຜນພັດທະນາພະນັກງານຂັບລົດ

8.1 ຜູ້ສະເໜີລາຄາຕ້ອງຈັດໃຫ້ມີແຜນການຝຶກອົບຮົມ ແລະ ພັດທະນາທັກສະພະນັກງານຂັບລົດຢ່າງນ້ອຍປີລະ 4 ຫົວຂໍ້ ຕະຫຼອດໄລຍະເວລາສັນຍາ ລວມທັງການຮົບນະລົງ ການສື່ສານ ແລະ ການນໍາບົດຮຽນຈາກອຸບັດເຫດ ຫຼື Near Miss ມາປັບປຸງການຂັບຂີ່ຢ່າງຕໍ່ເນື່ອງ ໂດຍໃຫ້ຄອບຄຸມຫົວຂໍ້ດັ່ງຕໍ່ໄປນີ້

8.1.1 ຄວາມຮູ້ພື້ນຖານກ່ຽວກັບເຄື່ອງຈັກແລະອຸປະກອນຕ່າງໆ ຂອງລົດຍົນ

8.1.2 ເຕັກນິກການຂັບຂີ່ລົດໃນສະຖານທີ່ຕ່າງໆ;

8.1.3 ການປ້ອງກັນແລະຫຼຸດຜ່ອນອຸປະຕິເຫດ ແລະ ແກ້ໄຂ ຫຼື ຮັບມືກັບສະຖານະການສຸກເສີນ;

8.1.4 ຄວາມຮູ້ທົ່ວໄປກ່ຽວກັບ ກົດຈະລາຈອນ, ການປະກັນໄພ ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງ;

8.1.5 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງພະນັກງານຂັບລົດທີ່ຄວນຮູ້ ເຊັ່ນ; ການກຽມຄວາມພ້ອມເພື່ອການຂັບຂີ່ຢ່າງປອດໄພ, ມາລະຍາດໃນການຂັບຂີ່ລົດ ແລະ ຫົວໃຈການໃຫ້ບໍລິການເປັນຕົ້ນ ໂດຍຈະຕ້ອງອົບຮົມພະນັກງານຂັບລົດກ່ອນເລີ່ມວຽກ ທັງນີ້ ຜູ້ສະເໜີລາຄາຈະເປັນ ຜູ້ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ;

8.2 ຜູ້ສະເໜີລາຄາ ຈະຕ້ອງນໍາເອົາແຜນການດໍາເນີນງານ, ແຜນການພັດທະນາ, ມາດຕະການດ້ານຄວາມປອດໄພ ແລະ ກິດຈະກໍາຕ່າງໆ ທີ່ໄດ້ນໍາສະເໜີໃນວັນນໍາສະເໜີແຜນງານ ມາປະຕິບັດໃຊ້ຈິງຕະຫຼອດອາຍຸສັນຍາ

NNN Building 4th Floor/Room No. D5, Boulichan Road, Phonsinouan Village, Sisattanark District, Vientiane Capital, Lao PDR.
Tel: + 856 21 223911, 222315, 222482, 219381
Fax: + 856 21 222089

Phonchanh Office, Hongsa District, Xayaboury Province, Lao PDR.
Tel: + 856 74 266121 – 29
Fax: + 856 74 266120

8.3 ຜູ້ຮັບຈ້າງສາມາດເພີ່ມກິດຈະກຳ ຫຼື ມາດຕະການໃໝ່ເພື່ອປັບປຸງ ແລະ ຍົກລະດັບປະສິດທິພາບການດຳເນີນງານໄດ້ ໂດຍບໍ່ຄິດຄ່າໃຊ້ຈ່າຍເພີ່ມເຕີມຈາກ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ.

8.4 ຜູ້ຮັບຈ້າງຈະບໍ່ສາມາດຍົກເລີກ, ລົດຜ່ອນ, ປ່ຽນແປງ ຫຼື ບໍ່ດຳເນີນການຕາມແຜນງານ ຫຼື ກິດຈະກຳທີ່ໄດ້ນຳສະເໜີໄວ້ ໂດຍບໍ່ໄດ້ຮັບການອະນຸມັດເປັນລາຍລັກອັກສອນຈາກ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ກ່ອນ.

8.5 ໃນກໍລະນີຜູ້ຮັບຈ້າງບໍ່ດຳເນີນການຕາມແຜນງານ ຫຼື ກິດຈະກຳທີ່ໄດ້ນຳສະເໜີໄວ້ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ມີສິດອອກໜັງສືແຈ້ງເຕືອນ ແລະ ກຳນົດໃຫ້ແກ້ໄຂພາຍໃນໄລຍະເວລາທີ່ກຳນົດ. ຫາກຍັງບໍ່ດຳເນີນການແກ້ໄຂ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ມີສິດປັບໃໝ ຕໍ່ກິດຈະກຳ ຕໍ່ຄັ້ງ (ຕາມບົດປັບໃໝ)

9.ການລາຍງານ ຜູ້ສະເໜີລາຄາຕ້ອງຈັດທຳລາຍງານຜົນການດຳເນີນງານ, ລາຍງານ KPI/SLA, ການຂາດວຽກ, ການມາວຽກຊ້າການຈັດຄົນແທນ, ອຸບັດເຫດ, Near Miss, ສຸຂະພາບ, ການຝຶກອົບຮົມ ແລະ ຂໍ້ມູນອື່ນໆ ຕາມຮູບແບບ ແລະ ກຳນົດເວລາທີ່ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ກຳນົດ ຜູ້ສະເໜີລາຄາຕ້ອງຄວບຄຸມ ແລະ ດຳເນີນງານໃຫ້ເປັນໄປຕາມຄ່າ KPI ແລະ SLA ຢ່າງເຄັ່ງຄັດ ຖ້າຜົນການດຳເນີນງານບໍ່ບັນລຸຄ່າເປົ້າໝາຍ ຫຼື ມີການຜິດ SLA, ຜູ້ສະເໜີລາຄາຕ້ອງວິເຄາະຫາສາເຫດ, ຈັດທຳແຜນແກ້ໄຂ (Corrective Action Plan) ແລະ ດຳເນີນການແກ້ໄຂໃຫ້ແລ້ວສຳເລັດພາຍໃນກຳນົດເວລາທີ່ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ກຳນົດ
ຜູ້ສະເໜີລາຄາຕ້ອງເຂົ້າຮ່ວມການປະຊຸມ Performance Review ຕາມຮອບເວລາທີ່ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ກຳນົດ ແລະ ຕ້ອງລາຍງານສະຖານະຄວາມຄືບໜ້າຂອງແຜນການແກ້ໄຂຈົນກວ່າບັນຫາຈະຖືກປິດໄດ້ຢ່າງສົມບູນ

10. ການກວດສຸຂະພາບປະຈຳປີ

10.1 ຜູ້ສະເໜີລາຄາຕ້ອງຈັດໃຫ້ມີການກວດສຸຂະພາບປະຈຳປີ ໂດຍຈັດໃຫ້ມີການກວດບໍ່ເກີນເດືອນມິຖຸນາ ຂອງທຸກປີ.

10.2 ສຳລັບພະນັກງານທີ່ເຂົ້າວຽກຫຼັງເດືອນມິຖຸນາບໍ່ເກີນ 6 ເດືອນ ກ່ອນການກວດໃນຮອບປີຖັດໄປ ແລະ ຜ່ານການທົດລອງວຽກ ຈະຕ້ອງມີຜົນການກວດສຸຂະພາບປະຈຳປີ ຕາມລາຍການທີ່ກຳນົດ

10.3 ຈະຕ້ອງກວດສຸຂະພາບປະຈຳປີ ຕາມຂໍ້ກຳນົດດ້ານສຸຂອະນາໄມຂອງ ບໍລິສັດໄຟຟ້າຫົງສາ ຈຳກັດ (ຕາມເອກະສານແບບ Annex 4) ແລະ ຕ້ອງຈັດໃຫ້ມີການກວດສຸຂະພາບເພີ່ມເຕີມອີກ 4 ລາຍການ ເຊິ່ງມີລາຍລະອຽດດັ່ງນີ້:

a) ການກວດສາຍຕາ ແລະ ສະມັດຕະພາບການເບິ່ງເຫັນໄລຍະໃກ້, ໄລຍະໄກ (Occupational eye examination including visual field and depth perception);

b) ການກວດສະມັດຕະພາບການໄດ້ຍິນ (Audiometry);

c) ການແທກຄື້ນໄຟຟ້າຫົວໃຈ (ECG);ສໍາລັບຜູ້ທີ່ມີອາຍຸ 35 ປີຂຶ້ນໄປ

d) ການກວດສອບສະມັດຕະພາບປອດ (Spirometry)

ຕ້ອງສົ່ງຜົນກວດສຸຂະພາບຂອງພະນັກງານ ໃຫ້ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ພາຍໃນ 30 ວັນຫຼັງຈາກກວດສຸຂະພາບແລ້ວ.

10.4 ຜູ້ສະເໜີລາຄາ ຈະຕ້ອງຈັດໃຫ້ມີແພດ ຫຼື ບຸກຄະລາກອນທາງການແພດທີ່ມີຄຸນວຸດທິ ເພື່ອໃຫ້ຄໍາປຶກສາ, ອະທິບາຍ ແລະ ແນະນໍາກ່ຽວກັບຜົນການກວດສຸຂະພາບປະຈໍາປີ ແກ່ພະນັກງານຂັບລົດທຸກຄົນ.

10.5 ພະນັກງານຂັບລົດຕ້ອງໄດ້ຮັບຄໍາແນະນໍາ ແລະ ຮັບຊາບຜົນການກວດສຸຂະພາບຂອງຕົນເອງ ຢ່າງຖືກຕ້ອງ ເພື່ອເຂົ້າໃຈສະພາບສຸຂະພາບ, ຄວາມສ່ຽງດ້ານສຸຂະພາບ ແລະ ແນວທາງການດູແລສຸຂະພາບທີ່ເໝາະສົມ.

10.6 ສໍາລັບພະນັກງານຂັບລົດທີ່ພົບພະຍາດ ຫຼື ພາວະສຸຂະພາບທີ່ອາດກະທົບຕໍ່ຄວາມປອດໄພໃນການຂັບຂີ່ ເຊັ່ນ ຄວາມດັນໂລຫິດສູງ, ເບົາຫວານ, ໂລກຫົວໃຈ, ຄວາມຜິດປົກກະຕິດ້ານສາຍຕາ ຫຼື ພະຍາດອື່ນໆ ທີ່ແພດວິນິດໄສວ່າອາດມີຜົນຕໍ່ການຂັບຂີ່, ຜູ້ສະເໜີລາຄາຕ້ອງມີລະບົບຕິດຕາມຜົນການຮັກສາ ແລະ ການຟື້ນຟູສຸຂະພາບຢ່າງຕໍ່ເນື່ອງ.

10.7 ຜູ້ສະເໜີລາຄາຕ້ອງຈັດທໍາລາຍງານຜົນການຕິດຕາມການຮັກສາ ແລະ ສະຖານະສຸຂະພາບຂອງພະນັກງານຂັບລົດທີ່ຢູ່ໃນກຸ່ມຄວາມສ່ຽງ ຫຼື ມີພະຍາດທີ່ອາດກະທົບຕໍ່ການຂັບຂີ່ ແລະ ນໍາສົ່ງໃຫ້ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ຕາມຄວາມຖີ່ທີ່ກໍານົດ.

10.8 ໃນກໍລະນີທີ່ແພດມີຄວາມເຫັນວ່າພະນັກງານຂັບລົດບໍ່ມີຄວາມພ້ອມ ຫຼື ມີຄວາມສ່ຽງຕໍ່ການຂັບຂີ່ ຜູ້ສະເໜີລາຄາຕ້ອງດໍາເນີນການຈັດຫາພະນັກງານທົດແທນ ຫຼື ກໍານົດມາດຕະການຄວບຄຸມທີ່ເໝາະສົມ ໂດຍບໍ່ໃຫ້ກະທົບຕໍ່ການບໍລິການ ແລະ ຄວາມປອດໄພ.

11. ຜູ້ສະເໜີລາຄາມີໜ້າທີ່ຮັບຜິດຊອບຄ່າອາກອນ ແລະ ສະຫວັດດີການຕ່າງໆ ຕາມກົດໝາຍແຫ່ງ ສປປ ລາວ.ແລະ ຕ້ອງສົ່ງເອກະສານຢືນຢັນໃຫ້ກັບ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ທຸກຄັ້ງ.

ຜູ້ສະເໜີລາຄາ ແລະ ພະນັກງານຂອງຕົນ ຕ້ອງບໍ່ກະທໍາການທຸຈະລິດ, ຕິດສິນບົນ, ສ້າງຜົນປະໂຫຍດທັບຊ້ອນ ຫຼື ການກະທໍາໃດໆ ທີ່ອາດສົ່ງຜົນກະທົບຕໍ່ຄວາມໂປ່ງໃສຂອງການດໍາເນີນງານ. ຫາກຝ່າຝືນ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ມີສິດຍົກເລີກສັນຍາໄດ້ທັນທີ.

12. ຜູ້ສະເໜີລາຄາຕ້ອງຈັດທໍາ Invoice ແລະ ເອກະສານປະກອບການເບີກຈ່າຍໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ສົ່ງມອບພາຍໃນໄລຍະເວລາທີ່ກໍານົດ. ຖ້າເກີດຄວາມລ່າຊ້າໃນການຈ່າຍເງິນເນື່ອງຈາກຄວາມຜິດພາດຂອງຜູ້ສະເໜີລາຄາ, ຜູ້ສະເໜີລາຄາຈະຕ້ອງຮັບຜິດຊອບສໍາຮອງຈ່າຍເງິນເດືອນ,

ຄ່າລ່ວງເວລາ (OT) ແລະ ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວຂ້ອງໃຫ້ພະນັກງານຕາມກຳນົດເວລາ ໂດຍຕ້ອງບໍ່ໃຫ້ສົ່ງຜົນກະທົບຕໍ່ການດຳເນີນງານຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ.

13.ໃນກໍລະນີທີ່ການຈ່າຍເງິນລ່າຊ້າສົ່ງຜົນໃຫ້ເກີດການຮ້ອງຮຽນ, ການຢຸດວຽກ, ການປະທ້ວງ ຫຼື ເຫດການໃດໆ ທີ່ກະທົບຕໍ່ການໃຫ້ບໍລິການ, ຜູ້ສະເໜີລາຄາຍິນຍອມໃຫ້ບໍລິສັດ ໄຟຟ້າ ຫົງສາ ຈຳກັດ. ຮຽກເກັບຄ່າປັບໃນອັດຕາ 1% ຂອງມູນຄ່າຄ່າຈ້າງໃນງວດນັ້ນ.

14.ການຄັດເລືອກ, ການຮັບເຂົ້າເຮັດວຽກ, ການຝຶກອົບຮົມ ແລະ ການຈັດສົ່ງພະນັກງານຂັບລົດໃໝ່ເຂົ້າປະຕິບັດວຽກ ຈະຕ້ອງດຳເນີນການຕາມຂໍ້ກຳນົດໃນຄູ່ມືບໍລິຫານພະນັກງານ Outsource ຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຢ່າງເຄັ່ງຄັດ. ພະນັກງານໃໝ່ທຸກຄົນ ຈະຕ້ອງຜ່ານການອົບຮົມ , ການທົດສອບ, ການຮັບຮອງຈາກ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ແລະ ມີຄຸນສົມບັດຄົບຖ້ວນຕາມທີ່ກຳນົດ ກ່ອນເຂົ້າປະຕິບັດວຽກ. ການນຳພະນັກງານທີ່ຍັງບໍ່ຜ່ານການອົບຮົມ, ບໍ່ໄດ້ຮັບການຮັບຮອງ ຫຼື ບໍ່ປະຕິບັດຕາມຄູ່ມືດັ່ງກ່າວ ໃຫ້ຖືວ່າເປັນການຜິດສັນຍາ ແລະ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ສະຫງວນສິດໃນການຫັກ KPI/SLA, ປັບໃໝ ຫຼື ດຳເນີນການອື່ນໆ ຕາມຂໍ້ກຳນົດຂອງສັນຍາ

15. ໃນກໍລະນີທີ່ພະນັກງານຂັບລົດ ເຊິ່ງຜູ້ສະເໜີລາຄາຈັດສົ່ງມາປະຕິບັດວຽກທົດແທນບໍ່ສາມາດປະຕິບັດວຽກໄດ້ແລະຖືກສົ່ງກັບຄືນ ທາງຜູ້ສະເໜີລາຄາຕ້ອງຈັດສົ່ງພະນັກງານຂັບລົດຄົນໃໝ່ໄປທົດແທນ ຈົນພະນັກງານຜູ້ປະຕິບັດວຽກທ່ານນັ້ນຈະເຫັນວ່າພະນັກວຽກຂັບລົດສາມາດຂັບລົດໃນວຽກນັ້ນໆ ໄດ້ຢ່າງປອດໄພ.

16.ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ມີສິດໃນການກວດສອບຄຸນສົມບັດແລະທົດສອບຄວາມສາມາດໃນການປະຕິບັດວຽກຂອງພະນັກງານຂັບລົດທຸກຄົນທີ່ຜູ້ສະເໜີລາຄາຈັດສົ່ງມາ ຈົນຜ່ານເກນການປະເມີນຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ

17. ໃນກໍລະນີທີ່ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ກວດສອບ ແລະ ພົບວ່າ ພະນັກງານຂັບລົດຄົນໃດຄົນໜຶ່ງມີຄຸນສົມບັດບໍ່ຖືກຕ້ອງຕາມ ຂໍ້ 2.1-2.4 ຫຼື ບໍ່ມີຄວາມສາມາດໃນການປະຕິບັດວຽກ ເຊັ່ນ: ທັກສະໃນການຂັບຂີ່ບໍ່ດີ ຫຼື ມີພຶດຕິກຳການຂັບລົດ ໂດຍປະໝາດ ເຊິ່ງ ອາດຈະບໍ່ປອດໄພ ຖ້າໃຫ້ຢູ່ປະຕິບັດວຽກ ຜູ້ສະເໜີລາຄາຕ້ອງປ່ຽນພະນັກງານຂັບລົດຄົນໃໝ່ມາປະຕິບັດວຽກທົດແທນພະນັກງານຂັບລົດຄົນດັ່ງກ່າວໂດຍໄວ ເມື່ອໄດ້ຮັບແຈ້ງຈາກ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ.

18. ການຈັດລົດຮັບ-ສົ່ງພະນັກງານຂັບລົດ

18.1 ຜູ້ສະເໜີລາຄາຕ້ອງຈັດຫາລະບົບລົດຮັບ-ສົ່ງ ສຳລັບພະນັກງານຂັບລົດໃຫ້ມີຈຳນວນພຽງພໍ ແລະ ຄອບຄຸມພື້ນທີ່ບ້ານພັກ ຫຼື ຈຸດພັກອາໄສຂອງພະນັກງານຂັບລົດຕະຫຼອດອາຍຸສັນຍາ ໂດຍບໍ່ໃຫ້ກະທົບຕໍ່ການມາປະຈຳວຽກ ແລະ ການໃຫ້ບໍລິການແກ່ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ.

18.2 ການໃຫ້ບໍລິການລົດຮັບ–ສົ່ງພະນັກງານ ຮອບທໍາອິດຕ້ອງເລີ່ມປະຕິບັດງານໃນເວລາ 05:00 ໂມງ ແລະ ຮອບສຸດທ້າຍຕ້ອງອອກຈາກພື້ນທີ່ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ໃນເວລາ 24:00 ໂມງ ຫຼື ຕາມການປ່ຽນແປງແຜນງານທີ່ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ແຈ້ງ.

18.3 ຜູ້ສະເໜີລາຄາຕ້ອງສາມາດຈັດລົດຮັບ-ສົ່ງເພີ່ມເຕີມ ຫຼື ປັບປ່ຽນເສັ້ນທາງໄດ້ ໃນກໍລະນີມີການຈ້າງພະນັກງານເພີ່ມ, ການປ່ຽນແປງບ້ານພັກ, ການຍ້າຍພື້ນທີ່ປະຈໍາວຽກ ຫຼື ການປັບປ່ຽນແຜນການເຮັດວຽກຂອງ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ..

18.4 ໃນກໍລະນີທີ່ພະນັກງານຂັບລົດມາປະຈໍາວຽກຊ້າ ຫຼື ບໍ່ສາມາດມາປະຈໍາວຽກໄດ້ ເນື່ອງຈາກການຈັດລົດຮັບ-ສົ່ງບໍ່ພຽງພໍ ຫຼື ບໍ່ເໝາະສົມ ໃຫ້ຖືວ່າເປັນຄວາມຮັບຜິດຊອບຂອງຜູ້ສະເໜີລາຄາ ແລະ ຖືກນໍາໄປຄິດໄລ່ໃນ KPI, SLA ແລະ ຖືກປັບໃໝ ຕາມເງື່ອນໄຂຂອງສັນຍາ.ຜູ້ສະເໜີລາຄາ ແລະ ພະນັກງານຂອງຜູ້ສະເໜີລາຄາຕ້ອງປະຕິບັດຕາມກົດລະບຽບຂອງ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ຢ່າງເຄັ່ງຄັດ.

18.5 ຜູ້ສະເໜີລາຄາຈະຕ້ອງປະຕິບັດຕາມກົດໝາຍແຮງງານ ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງໃນການຈັດຫາພະນັກງານຂັບລົດ ເພື່ອໃຫ້ບໍລິການຕາມສັນຍາຈ້າງຢ່າງເຄັ່ງຄັດ.

19. ຜູ້ສະເໜີລາຄາຈະຕ້ອງຮັບຜິດຊອບຄ່າໃຊ້ຈ່າຍອື່ນທີ່ຕ້ອງເກີດຂຶ້ນໃນຖານະຜູ້ໃຊ້ແຮງງານ ໃຫ້ກັບພະນັກງານຂອງຕົນ ອັນໄດ້ແກ່: ເງິນເດືອນ, ຄ່າແຮງງານ, ຄ່າຊົດເຊີຍ ລວມທັງຜົນປະໂຫຍດຕາມທີ່ກໍານົດໄວ້ໃນລະບຽບກົດໝາຍ ແລະ ສັນຍາແຮງງານດ້ວຍຕົນເອງ.

ຜູ້ສະເໜີລາຄາ ແລະ ພະນັກງານຂອງຕົນ ຈະຕ້ອງຮັກສາຄວາມລັບຂອງຂໍ້ມູນ, ເອກະສານ, ແຜນງານ, ຂໍ້ມູນດ້ານທຸລະກິດ, ຂໍ້ມູນດ້ານເຕັກນິກ, ຂໍ້ມູນພະນັກງານ ແລະ ຂໍ້ມູນອື່ນໃດຂອງ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ທີ່ໄດ້ຮັບ ຫຼື ລ່ວງຮູ້ໃນໄລຍະສັນຍາ ແລະ ຫ້າມນໍາໄປເຜີຍແຜ່ ຫຼື ນໍາໄປໃຊ້ເພື່ອປະໂຫຍດອື່ນ ໂດຍບໍ່ໄດ້ຮັບອະນຸຍາດ.

20. ການລົງເວລາເຂົ້າ-ອອກວຽກ ແລະ ການຢືນຢັນການມາປະຈໍາວຽກ

20.1 ພະນັກງານຂັບລົດທຸກຄົນຕ້ອງປະຕິບັດຕາມລະບຽບການລົງເວລາເຂົ້າວຽກ, ເລີກວຽກ ແລະ ການຢືນຢັນການມາປະຈໍາວຽກ ຕາມລະບົບ ແລະ ຂໍ້ກໍານົດຂອງ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ທີ່ໃຊ້ໃນປັດຈຸບັນ ຫຼື ທີ່ຈະມີການປັບປ່ຽນໃນອະນາຄົດ.

20.2 ພະນັກງານຂັບລົດຈະຕ້ອງດໍາເນີນການສະແກນໃບໜ້າ (Face Scan) ຫຼື ລົງເວລາຜ່ານລະບົບທີ່ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ກໍານົດ ຢູ່ພຽງແຕ່ຈຸດ ຫຼື ພື້ນທີ່ທີ່ອະນຸຍາດເທົ່ານັ້ນ.

20.3 ກໍລະນີທີ່ພົບວ່າມີການສະແກນໃບໜ້າ ຫຼື ລົງເວລານອກຈຸດທີ່ກໍານົດ, ຂໍ້ມູນການມາປະຈໍາວຽກໃນວັນນັ້ນຈະຖືກຖອນສິດການຄິດໄລ່ຄ່າແຮງງານ ແລະ ຄ່າລ່ວງເວລາ (OT) ສໍາລັບວັນດັ່ງກ່າວ.

20.4 ກໍລະນີທີ່ພົບການລົງເວລາເປັນເທັດ, ການປອມແປງຂໍ້ມູນ, ການສວມສິດລົງເວລາແທນກັນ, ຫຼື ການກະທໍາໃດໆທີ່ເຮັດໃຫ້ຂໍ້ມູນການມາປະຈໍາວຽກບໍ່ກົງກັບຄວາມເປັນຈິງ, ໃຫ້ຖືວ່າ

ເປັນການກະທຳຜິດວິໄນຮ້າຍແຮງ. ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ສະຫງວນສິດໃນການຮ້ອງຂໍໃຫ້ຜູ້ສະເໜີລາຄາຖອນພະນັກງານດັ່ງກ່າວອອກຈາກໂຄງການໂດຍທັນທີ ໂດຍບໍ່ຈຳເປັນຕ້ອງມີການຕັກເຕືອນລ່ວງໜ້າ.

ຜູ້ສະເໜີລາຄາຈະຕ້ອງຄຸ້ມຄອງ, ຈັດເກັບ, ໃຊ້ ແລະ ເຜີຍແຜ່ຂໍ້ມູນສ່ວນບຸກຄົນຂອງພະນັກງານ ຕາມກົດໝາຍ ແລະ ມາດຕະຖານການຄຸ້ມຄອງຂໍ້ມູນທີ່ກ່ຽວຂ້ອງ.
ກໍລະນີທີ່ຜູ້ສະເໜີລາຄາບໍ່ຄວບຄຸມໃຫ້ພະນັກງານປະຕິບັດຕາມລະບຽບການລົງເວລາຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ສະຫງວນສິດໃນການຊະລໍການຈ່າຍຄ່າບໍລິຫານຈັດການ, ຄ່າລ່ວງເວລາ ຫຼື ຄ່າໃຊ້ຈ່າຍອື່ນທີ່ກ່ຽວຂ້ອງ ຈົນກວ່າຈະກວດສອບ ແລະ ຢືນຢັນຂໍ້ມູນແລ້ວສຳເລັດ.

21. ພະນັກງານຂັບລົດຈະຕ້ອງສົ່ງລາຍລະອຽດການກວດລົດໃນລະບົບທີ່ທາງບໍລິສັດ ໄຟຟ້າ ຫົງສາ ຈຳກັດ ເປັນຜູ້ກຳນົດ ຖ້າພະນັກງານຂັບລົດຄົນໃດບໍ່ສົ່ງລະບົບການກວດລົດ ທາງບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຈະບໍ່ຈ່າຍຄ່າເຮັດວຽກລ່ວງເວລາກ່ອນເຂົ້າງານໃນມື້ນັ້ນໆ.

22. ຄ່າລ່ວງເວລາໃນການເດີນທາງ

ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຈະບໍ່ຮັບຜິດຊອບຄ່າຈ້າງ, ຄ່າ OT, ຄ່າເດີນທາງ ຫຼື ຄ່າໃຊ້ຈ່າຍໃດໆ ທີ່ເກີດຈາກການເດີນທາງໄປ-ກັບ, ການລໍຖ້າລົດຮັບ-ສົ່ງ ຫຼື ເວລາກ່ອນ ແລະ ຫຼັງເວລາປະຕິບັດວຽກ. ເວລາດັ່ງກ່າວຈະບໍ່ຖືກນັບເປັນເວລາປະຕິບັດວຽກ ຫຼື OT ສຳລັບການຮຽກເກັບຄ່າບໍລິການຈາກ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ . ຜູ້ສະເໜີລາຄາຕ້ອງເປັນຜູ້ບໍລິຫານ ແລະ
ຮັບຜິດຊອບຄ່າໃຊ້ຈ່າຍ ພ້ອມທັງຈັດການລົດຮັບ-ສົ່ງ ແລະ ເວລາເດີນທາງໃຫ້ພະນັກງານມາປະຈຳວຽກໄດ້ຕາມກຳນົດ ໂດຍບໍ່ສາມາດຮຽກຮ້ອງຄ່າໃຊ້ຈ່າຍເພີ່ມເຕີມຈາກ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ.

23.ການນຳລົດຂອງບໍລິສັດໄປຈອດນອກພື້ນທີ່

23.1 ຫ້າມພະນັກງານຂັບລົດນຳລົດຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ໄປຈອດ ຫຼື ເກັບຮັກສາໄວ້ທີ່ບ້ານພັກ ຫຼື ສະຖານທີ່ສ່ວນຕົວຂອງພະນັກງານຂັບລົດ ຍົກເວັ້ນແຕ່ໄດ້ຮັບອະນຸມັດຈາກ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ເປັນລາຍລັກອັກສອນເທົ່ານັ້ນ.

23.2 ຜູ້ສະເໜີລາຄາຕ້ອງຄວບຄຸມ ແລະ ກຳກັບດູແລພະນັກງານຂັບລົດໃຫ້ປະຕິບັດຕາມຂໍ້ກຳນົດນີ້ຢ່າງເຄັ່ງຄັດ.

23.3 ກໍລະນີທີ່ພົບວ່າມີການນຳລົດໄປຈອດຢູ່ບ້ານພັກ ຫຼື ສະຖານທີ່ສ່ວນຕົວໂດຍບໍ່ໄດ້ຮັບອະນຸຍາດ ແລະ ເກີດການສູນຫາຍ, ຄວາມເສຍຫາຍ, ອຸບັດເຫດ, ການລັກຊັບ ຫຼື ຄວາມເສຍຫາຍໃດໆຕໍ່ຕົວລົດ ຫຼື ຊັບສິນຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ, ຜູ້ສະເໜີລາຄາຕ້ອງເປັນຜູ້ຮັບຜິດຊອບຕໍ່ຄວາມເສຍຫາຍ ແລະ ຄ່າໃຊ້ຈ່າຍທັງໝົດທີ່ເກີດຂຶ້ນ.

24. ການດູແລຄວາມສະອາດ ແລະ ຄວາມເປັນລະບຽບ

24.1 ຜູ້ສະເໜີລາຄາຕ້ອງຮັບຜິດຊອບດູແລ, ບຳລຸງຮັກສາ ແລະ ຮັກສາຄວາມສະອາດ ບໍລິເວນທີ່ພັກຂອງພະນັກງານຂັບລົດ, ບໍລິເວນພັກຄອຍ, ພື້ນທີ່ຈອດລົດ, ຈຸດລ້າງລົດ ແລະ ພື້ນທີ່ອື່ນໆ ທີ່ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ກຳນົດ ໃຫ້ມີຄວາມສະອາດ, ເປັນລະບຽບ, ປອດໄພ ແລະ ພ້ອມໃຊ້ງານຢູ່ສະເໝີ.

24.2 ຜູ້ສະເໜີລາຄາຕ້ອງດຳເນີນການຕາມຫຼັກການ 5S, ຂໍ້ກຳນົດດ້ານ SHEQ, ຂໍ້ກຳນົດດ້ານສິ່ງແວດລ້ອມ ແລະ ມາດຕະການຄວາມປອດໄພຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຢ່າງເຄັ່ງຄັດ.

24.3 ຂີ້ເຫຍື້ອ, ນ້ຳເສຍ, ນ້ຳມັນ, ສານເຄມີ ຫຼື ວັດສະດຸອື່ນໆ ທີ່ເກີດຈາກການໃຊ້ງານ ຫຼື ການລ້າງລົດ ຈະຕ້ອງຖືກຈັດການ ແລະ ກຳຈັດຢ່າງຖືກຕ້ອງ ຕາມລະບຽບຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ແລະ ກົດໝາຍທີ່ກ່ຽວຂ້ອງ.

24.4 ກໍລະນີທີ່ພົບການບໍ່ຮັກສາຄວາມສະອາດ, ຄວາມບໍ່ເປັນລະບຽບ, ການກຳຈັດຂອງເສຍບໍ່ຖືກຕ້ອງ ຫຼື ການຝ່າຝືນຂໍ້ກຳນົດດ້ານ SHEQ ໃຫ້ຖືວ່າເປັນການຜິດຂໍ້ກຳນົດ ແລະ ເງື່ອນໄຂຂອງສັນຍາ. ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ສະຫງວນສິດໃນການອອກໜັງສືແຈ້ງເຕືອນ ແລະ ຕັດຄະແນນການປະເມີນ KPI/SLA ຕາມຫຼັກເກນທີ່ກຳນົດໄວ້ໃນສັນຍາ.

25. ການຈ່າຍຄ່າຈ້າງ

ເງື່ອນໄຂການຊຳລະເງິນ ມີດັ່ງນີ້:

ໃນກໍລະນີທີ ຜູ້ສະເໜີລາຄາສົ່ງເອກະສານ ໃບແຈ້ງໜີ້ ລະຫວ່າງວັນທີ 1-15 ຂອງເດືອນ ບໍລິສັດ ຈະຊຳລະເງິນຄ່າຈ້າງໃຫ້ຜູ້ສະເໜີລາຄາ ພາຍໃນວັນທີ 10 ຂອງເດືອນຖັດໄປ.

ໃນກໍລະນີທີໃບແຈ້ງໜີ້ບໍ່ຖືກຕ້ອງ ຫຼື ວຽກງານບໍ່ແລ້ວຕາມກຳໜົດ ຜູ້ສະເໜີລາຄາຕ້ອງສົ່ງໃບແຈ້ງໜີ້ສະບັບແກ້ໄຂໃຫ້ ບໍລິສັດ ຫຼື ແກ້ໄຂ ຫຼື ສົ່ງມອບວຽກງານໃຫ້ແລ້ວເສັດຕາມຕົກລົງຈົນເປັນທີພໍໃຈຂອງ ບໍລິສັດ ພາຍໃນວັນທີ 15 ຂອງເດືອນນັ້ນ ໆ ບໍລິສັດ ຈະຈ່າຍເງິນໃຫ້ຜູ້ສະເໜີລາຄາພາຍໃນວັນທີ 10 ຂອງເດືອນຖັດໄປ.

ໃນກໍລະນີຜູ້ສະເໜີລາຄາສົ່ງເອກະສານ ໃບແຈ້ງໜີ້ ລະຫວ່າງວັນທີ 16-31 ຂອງເດືອນ ບໍລິສັດຈະຊຳລະເງິນຄ່າຈ້າງໃຫ້ກັບຜູ້ຮັບ ເໝາພາຍໃນວັນທີ 25 ຂອງເດືອນຖັດໄປ.

ໃນກໍລະນີທີໃບແຈ້ງໜີ້ບໍ່ຖືກຕ້ອງ ຫຼື ວຽກງານບໍ່ແລ້ວຕາມກຳໜົດ ຜູ້ສະເໜີລາຄາຕ້ອງສົ່ງໃບແຈ້ງໜີ້ສະບັບແກ້ໄຂໃຫ້ ບໍລິສັດ ຫຼື ແກ້ໄຂ ຫຼື ສົ່ງມອບວຽກງານໃຫ້ແລ້ວເສັດຕາມຕົກລົງຈົນເປັນທີພໍໃຈຂອງ ບໍລິສັດ ພາຍໃນທ້າຍດືອນ ຂອງເດືອນນັ້ນ ໆ ບໍລິສັດ ຈະຈ່າຍເງິນໃຫ້ຜູ້ສະເໜີລາຄາພາຍໃນວັນທີ 25 ຂອງເດືອນຖັດໄປ.

HONGSA POWER

ການເຮັດວຽກເພີ່ມໂມງ ຫຼື OT ຂອງພະນັກງານຈະເຮັດການເບີກຈ່າຍເມື່ອ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ກວດສອບຄວາມຖືກຕ້ອງຮຽບຮ້ອຍແລ້ວ ເຊິ່ງຈະບໍ່ໄດ້ຮັບເງິນກົງຕາມງວດຂອງຄ່າບໍລິຫານຈັດການຂອງເດືອນນັ້ນໆ ແຕ່ຈະໄດ້ຮັບອີກງວດໜຶ່ງຂອງເດືອນຖັດໄປ ແລະ ຕ້ອງສົ່ງເອກະສານເພື່ອວາງບິນ ບໍ່ເກີນວັນທີ 5 ຂອງເດືອນຖັດໄປຈາກການໃຫ້ບໍລິການ ແລະ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຈະຊຳລະເງິນຕາມເງື່ອນໄຂ ຂໍ້ 9.1.

ຜູ້ສະເໜີລາຄາຕ້ອງສະເໜີລາຄາເປັນສະກຸນເງິນບາດ (THB) ແຕ່ໃບແຈ້ງໜີ້ ຫຼື ໃບບິນເກັບເງິນ ຕ້ອງອອກເປັນສະກຸນເງິນກີບ ເຊິ່ງບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຈະໄດ້ຊຳລະລາຄາທັງໝົດໃຫ້ຜູ້ສະເໜີລາຄາເປັນສະກຸນເງິນກີບເທົ່ານັ້ນ. ການຄິດໄລ່ອັດຕາແລກປ່ຽນສະກຸນເງິນຈາກເງິນບາດເປັນເງິນກີບ ໃຫ້ນຳໃຊ້ອັດຕາແລກປ່ຽນການໂອນເງິນຜ່ານລະບົບອີເລັກໂທຣນິກ (Electronic Funds Transfer) ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ວັນທີ 1 ຂອງເດືອນທີ່ໃຫ້ບໍລິການ, ກໍລະນີວັນທີ 1 ຂອງເດືອນທີ່ໃຫ້ບໍລິການເປັນວັນຍຸດ ໃຫ້ນຳໃຊ້ອັດຕາແລກປ່ຽນຂອງວັນທຳງານກ່ອນໜ້າ (ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ເລກທີ 15/ ສພຊ, ລົງວັນທີ 7 ກໍລະກົດ 2022 ແລະ ຄຳສັ່ງວ່າດ້ວຍການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 10/ລບ, ລົງວັນທີ 14 ກໍລະກົດ 2023 ທີ່ໄດ້ກຳນົດວ່າ: "ການກຳນົດມູນຄ່າ, ການຕິດປະກາດ ແລະ ໂຄສະນາ, ລາຄາສິນຄ້າ, ຄ່າບໍລິການ ເງິນເດືອນ ຫຼື ຄ່າແຮງງານ ແລະ ອື່ນໆ ໃນ ສປປ ລາວ ຕ້ອງເປັນເງິນກີບ. ທຸກການກຳນົດໂຄງສ້າງລາຄາສິນຄ້າ ແລະ ບໍລິການ ໃຫ້ຖືເອົາສະກຸນເງິນກີບ ເປັນພື້ນຖານໃນການຄິດໄລ່ລາຄາ" ).

26. ຜູ້ສະເໜີລາຄາ ຈະຕ້ອງຈັດທຳປະກັນອຸບັດເຫດສ່ວນບຸກຄົນ (Personal Accident Insurance) ໃຫ້ແກ່ພະນັກງານຂັບລົດທຸກຄົນ ຕັ້ງແຕ່ວັນເລີ່ມປະຕິບັດວຽກ ແລະ ຕ້ອງຮັກສາສະຖານະການຄຸ້ມຄອງຂອງປະກັນໃຫ້ມີຜົນບັງຄັບໃຊ້ຕະຫຼອດໄລຍະສັນຍາ.

ນອກຈາກປະກັນອຸບັດເຫດສ່ວນບຸກຄົນ ຜູ້ສະເໜີລາຄາຈະຕ້ອງຈັດໃຫ້ມີປະກັນຄວາມຮັບຜິດຕໍ່ພະນັກງານ, ປະກັນຄວາມຮັບຜິດຕໍ່ບຸກຄົນພາຍນອກ ແລະ ປະກັນອື່ນໆ ຕາມທີ່ກົດໝາຍກຳນົດຕະຫຼອດໄລຍະສັນຍາ.

27. ຜູ້ສະເໜີລາຄາ ຕ້ອງຮັກສາຄວາມສະອາດບໍລິເວນຈຸດລ້າງລົດ, ຮ່ອງລະບາຍນ້ຳ ແລະ ພື້ນທີ່ໂດຍຮອບໃຫ້ຢູ່ໃນສະພາບສະອາດ ແລະ ເປັນລະບຽບຢູ່ສະເໝີ.

ຜູ້ສະເໜີລາຄາ ຈະຕ້ອງດຳເນີນການຕັກຕະກອນ, ກຳຈັດຂີ້ຕົມ, ຂອງເສຍ ແລະ ສິ່ງປົກເປື້ອນຕ່າງໆ ອອກຈາກຈຸດລ້າງລົດ ຕາມຄວາມເໝາະສົມ ຫຼື ຕາມຄຳແນະນຳຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ .

HONGSA POWER

ຫຼັງຈາກການລ້າງລົດ ຕ້ອງທຳຄວາມສະອາດພື້ນທີ່ ແລະ ຄວບຄຸມບໍ່ໃຫ້ເກີດນ້ຳຂັງ, ຄາບນ້ຳມັນ, ຂີ້ຕົມ ຫຼື ສະພາບພື້ນລື່ນທີ່ອາດກໍ່ໃຫ້ເກີດອັນຕະລາຍຕໍ່ພະນັກງານ, ຜູ້ໃຊ້ທາງ ຫຼື ຊັບສິນຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ .

ກໍລະນີທີ່ພົບການລະເລີຍການດູແລຄວາມສະອາດ, ການຈັດການຕະກອນ ຫຼື ປ່ອຍໃຫ້ພື້ນທີ່ມີຄວາມສ່ຽງຕໍ່ການລື່ນລົ້ມ ໃຫ້ຖືວ່າເປັນການຝ່າຝືນຂໍ້ກຳນົດ SHEQ ແລະ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ສະຫງວນສິດໃນການອອກໜັງສືແຈ້ງເຕືອນ ແລະ ຕັດຄະແນນການປະເມີນ KPI/SLA ຕາມຫຼັກເກນທີ່ກຳນົດ.

## ບົດປັບໃໝ

1. ໃນກໍລະນີຜູ້ສະເໜີລາຄາບໍ່ສາມາດປະດິບັດຕາມຂໍ້ 1-2 ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຄິດຄ່າປັບໃໝ 700.000 ກີບ (ເຈັດແສນກີບ)/ ຄົນ / ວັນ.

2. ການປັບໃໝກໍລະນີບໍ່ສາມາດຈັດຫາພະນັກງານຂັບລົດທົດແທນ

ຫາກຜູ້ສະເໜີລາຄາບໍ່ສາມາດຈັດຫາພະນັກງານຂັບລົດທີ່ມີຄຸນສົມບັດຄົບຖ້ວນມາທົດແທນໄດ້ພາຍໃນໄລຍະເວລາຕາມທີ່ກຳນົດ, ຜູ້ສະເໜີລາຄາຍິນຍອມໃຫ້ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຫັກຄ່າຈ້າງໃນອັດຕາ 700.000 ກີບ (ເຈັດແສນກີບ) ຕໍ່ຄົນຕໍ່ວັນ ຈົນກວ່າຈະສາມາດຈັດຫາພະນັກງານຂັບລົດທົດແທນໄດ້ຄົບຖ້ວນ.

ໃນກໍລະນີຜູ້ສະເໜີລາຄາບໍ່ສາມາດຈັດຫາພະນັກງານຂັບລົດ ຫຼື ບໍລິການຕາມສັນຍາໄດ້ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ມີສິດວ່າຈ້າງຜູ້ໃຫ້ບໍລິການອື່ນ ຫຼື ດຳເນີນການແທນຊົ່ວຄາວ ໂດຍຄ່າໃຊ້ຈ່າຍທັງໝົດຈະເປັນພາລະຂອງຜູ້ສະເໜີລາຄາ.

3. ໃນກໍລະນີທີ່ຜູ້ສະເໜີລາຄາບໍ່ສາມາດຈັດສົ່ງພະນັກງານຂັບລົດມາທົດແທນໄດ້ຕາມຂໍ້ກຳນົດໃນຂໍ້ 5 ຈົນເຮັດໃຫ້ພະນັກງານຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຈຳເປັນຕ້ອງເປັນຜູ້ຂັບລົດເອງ ແລະ ເກີດອຸບັດເຫດ, ຄວາມເສຍຫາຍຕໍ່ຊັບສິນ, ການບາດເຈັບ ຫຼື ການສູນເສຍໃດໆ ອັນເກີດຂຶ້ນຈາກການບໍ່ສາມາດຈັດຫາພະນັກງານຂັບລົດທົດແທນດັ່ງກ່າວ, ຜູ້ສະເໜີລາຄາຕ້ອງຮັບຜິດຊອບຊົດເຊີຍຄວາມເສຍຫາຍ ແລະ ຄ່າໃຊ້ຈ່າຍທີ່ເກີດຂຶ້ນຕາມຄວາມເສຍຫາຍຕົວຈິງ ຕາມເງື່ອນໄຂສັນຍາ.

4.ໃນກໍລະນີທີ່ພະນັກງານຂັບລົດຂອງຜູ້ສະເໜີລາຄາມາປະຕິບັດວຽກລ່າຊ້າກວ່າເວລາເລີ່ມປະຕິບັດວຽກທີ່ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ກຳນົດ ຫຼື ອອກຈາກໜ້າທີ່ກ່ອນເວລາສິ້ນສຸດວຽກ ໂດຍບໍ່ໄດ້ຮັບອະນຸຍາດ ຈົນເຮັດໃຫ້ການປະຈຳວຽກບໍ່ຄົບຖ້ວນ ຫຼື ອາດກໍ່ໃຫ້ເກີດຄວາມເສຍຫາຍແກ່ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ໃຫ້ຖືວ່າເປັນການຜິດເງື່ອນໄຂສັນຍາ ຂອງການໃຫ້ບໍລິການ.

ໃນກໍລະນີທີ່ຜູ້ສະເໜີລາຄາບໍ່ສາມາດຈັດຫາພະນັກງານທົດແທນໄດ້ທັນເວລາ ໃຫ້ດຳເນີນການ ຕາມຂໍ້ 2 ບົດປັບໃໝ

5. ກໍລະນີພະນັກງານຂັບລົດມີຄວາມປະພຶດບໍ່ເໝາະສົມ

ຖ້າພະນັກງານຂັບລົດຄົນໃດຄົນໜຶ່ງ ມີຄວາມປະພຶດບໍ່ຮຽບຮ້ອຍ, ບໍ່ປະຕິບັດຕາມຂໍ້ບັງຄັບ, ຄຳສັ່ງ, ລະບຽບ ຫຼື ຂໍ້ກຳນົດຕ່າງໆ ຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຫຼື ບໍ່ປະຕິບັດຕາມຄຳສັ່ງຂອງຜູ້ຄວບຄຸມລົດ, ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ມີສິດແຈ້ງໃຫ້ຜູ້ສະເໜີລາຄາປ່ຽນຕົວພະນັກງານຂັບລົດດັ່ງກ່າວໄດ້ທັນທີ.

6.ກໍລະນີການແຕ່ງກາຍບໍ່ຖືກຕາມຂໍ້ກຳນົດ

ຖ້າພະນັກງານຂັບລົດບໍ່ແຕ່ງເຄື່ອງແບບຕາມທີ່ກຳນົດ ຫຼື ແຕ່ງກາຍບໍ່ສຸພາບ ບໍ່ຮຽບຮ້ອຍ ຫຼື ບໍ່ເໝາະສົມຕໍ່ການປະຕິບັດໜ້າທີ່, ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ມີສິດແຈ້ງເຕືອນ ຫຼື ສັ່ງໃຫ້ຜູ້ສະເໜີລາຄາປ່ຽນຕົວພະນັກງານຂັບລົດຄົນດັ່ງກ່າວໄດ້.

7.ການຈັດຫາພະນັກງານຂັບລົດທົດແທນ

ເມື່ອຜູ້ສະເໜີລາຄາໄດ້ຮັບແຈ້ງຈາກຜູ້ຄວບຄຸມລົດຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ໃຫ້ປ່ຽນຕົວພະນັກງານຂັບລົດ ຜູ້ສະເໜີລາຄາຕ້ອງຈັດຫາພະນັກງານຂັບລົດຄົນໃໝ່ ທີ່ມີຄຸນສົມບັດຄົບຖ້ວນຕາມຂໍ້ 2.1-2.4 ມາທົດແທນ ບໍ່ໃຫ້ກາຍກຳນົດພາຍໃນມື້ຖັດໄປ ນັບຈາກວັນທີ່ໄດ້ຮັບແຈ້ງ.

8.ກໍລະນີກວດພົບສານເຫຼົ້າ

ຖ້າພະນັກງານຂັບລົດຄົນໃດຄົນໜຶ່ງ ຖືກກວດພົບຄ່າແອລກອຮໍໃນລົມຫາຍໃຈ ຫຼື ມີຜົນກວດເປັນບວກ ບໍ່ວ່າຈະມີຄ່າເທົ່າໃດກໍຕາມ ຖືວ່າເປັນການຝ່າຝືນຂໍ້ກຳນົດດ້ານຄວາມປອດໄພຢ່າງຮ້າຍແຮງ. ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ມີສິດສັ່ງໃຫ້ຖອນພະນັກງານຂັບລົດຄົນດັ່ງກ່າວອອກຈາກການປະຕິບັດວຽກທັນທີ ແລະ ຜູ້ສະເໜີລາຄາຕ້ອງຈັດຫາພະນັກງານຂັບລົດຄົນໃໝ່ທີ່ມີຄຸນສົມບັດຕາມຂໍ້ 2.1-2.4 ມາທົດແທນໂດຍທັນທີ.

ຫາກຜູ້ສະເໜີລາຄາບໍ່ສາມາດຈັດຫາພະນັກງານຂັບລົດທົດແທນໄດ້ຕາມກຳນົດ ຍິນຍອມໃຫ້ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຫັກຄ່າຈ້າງໃນອັດຕາ **700,000 ກີບ/ຄົນ/ວັນ** ຈົນກວ່າຈະສາມາດຈັດຫາພະນັກງານທົດແທນໄດ້

9. ຖ້າເກີດການປະທ້ວງ ຫຼື ການນັດຢຸດງານຂອງພະນັກງານຂັບລົດ ຜູ້ສະເໜີລາຄາຕ້ອງຄວບຄຸມສະຖານະການ ແລະ ຈັດຫາພະນັກງານຂັບລົດມາທົດແທນໂດຍທັນທີ ເພື່ອບໍ່ໃຫ້ສົ່ງຜົນກະທົບຕໍ່ການດຳເນີນງານຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ. ຫາກບໍ່ສາມາດຈັດຫາພະນັກງານຂັບລົດມາທົດແທນໄດ້ໃນວັນດັ່ງກ່າວ ຜູ້ສະເໜີລາຄາຍິນຍອມໃຫ້ປັບໃໝໃນອັດຕາ 700,000 ກີບ/ຄົນ/ວັນ. ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ມີສິດອອກໜັງສືຕັກເຕືອນ ແລະ ຫາກເຫດການດັ່ງກ່າວມີຄວາມ

ຮຸນແຮງ ຫຼື ສ້າງຄວາມເສຍຫາຍໃຫ້ແກ່ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ຖືວ່າເປັນການຜິດສັນຍາ ແລະ ບໍລິສັດ ມີສິດຍົກເລີກສັນຍາໄດ້ທັນທີ.

10. ໃນກໍລະນີທີ່ລົດເກີດອຸບັດເຫດຈາກຄວາມຜິດຂອງພະນັກງານຂັບລົດ ແລະ ບໍ່ສາມາດນໍາມາໃຊ້ງານໄດ້ ຫຼື ຕ້ອງໃຊ້ເວລາຊ່ອມແປງເກີນ 1 ເດືອນ, ຜູ້ສະເໜີລາຄາຈະຕ້ອງຈັດຫາລົດທົດແທນທີ່ມີສະເປັກ ແລະ ຄຸນນະພາບບໍ່ຕໍ່າກວ່າລົດຄັນເດີມ ເພື່ອຮອງຮັບການໃຊ້ງານຢ່າງຕໍ່ເນື່ອງ.

ກໍລະນີທີ່ຜູ້ສະເໜີລາຄາບໍ່ສາມາດຈັດຫາລົດທົດແທນໄດ້ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ສະຫງວນສິດໃນການເຊົ່າ ຫຼື ຈັດຫາລົດທົດແທນເອງ ແລະ ຫັກຄ່າໃຊ້ຈ່າຍທີ່ເກີດຂຶ້ນຈາກຄ່າບໍລິຫານຈັດການປະຈໍາເດືອນ (Management Fee) ຂອງຜູ້ສະເໜີລາຄາ ໂດຍບໍ່ກະທົບຕໍ່ສິດຂອງ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ໃນການດໍາເນີນການອື່ນໆ ຕາມເງື່ອນໄຂສັນຍາ.

**ເງື່ອນໄຂການປະຕິບັດໜ້າທີ່ ພະນັກງານປະຈໍາຫ້ອງການຢູ່ຫົງສາ**

ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ຈະດໍາເນີນການປະເມີນຜົນການປະຕິບັດງານຂອງຜູ້ຈັດການປະຈໍາໄຊງານ (Site Manager), ພະນັກງານຄວາມປອດໄພ (Safety Officer) ແລະ ຊ່າງເຕັກນິກ (Technician) ຂອງຜູ້ສະເໜີລາຄາ ຕາມເກນການປະເມີນທີ່ລະບຸໄວ້ໃນ Annex 5. ຜົນການປະເມີນດັ່ງກ່າວຈະນໍາມາໃຊ້ພິຈາລະນາປັບປຸງ, ແກ້ໄຂ ຫຼື ປ່ຽນແທນບຸກຄະລາກອນຕາມຄວາມເໝາະສົມ.

ກໍລະນີ ຜູ້ຈັດການປະຈໍາຫ້ອງການບໍ່ຜ່ານການປະເມີນຖ້າ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ປະເມີນແລ້ວເຫັນວ່າ ຜູ້ຈັດການ ບໍ່ຜ່ານເກນການປະເມີນ ບໍ່ສາມາດຄວບຄຸມງານໄດ້ຢ່າງມີປະສິດທິພາບ ເຮັດໃຫ້ເກີດບັນຫາຊໍ້າໆ ຫຼື ກະທົບຕໍ່ການດໍາເນີນງານ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ມີສິດແຈ້ງໃຫ້ຜູ້ສະເໜີລາຄາ ປ່ຽນ ຜູ້ຈັດການປະຈໍາຫ້ອງການຄົນໃໝ່ຜູ້ສະເໜີລາຄາຕ້ອງດໍາເນີນການປ່ຽນ ຜູ້ຈັດການປະຈໍາຫ້ອງການພາຍໃນ 30 ວັນ ນັບຈາກວັນທີ່ໄດ້ຮັບແຈ້ງ ແລະສົ່ງ CV ແລະຂໍ້ມູນຂອງ ຜູ້ຈັດການປະຈໍາຫ້ອງການຄົນໃໝ່ ໃຫ້ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ພິຈາລະນາ.

**ຂັ້ນຕອນການຕັກເຕືອນ, ການແກ້ໄຂ ແລະ ຄ່າປັບໃໝ( ຍົກເວັ້ນການປັບໃໝຕາມຈໍານວນຄົນທີ່ບໍ່ມາເຮັດວຽກລາຍວັນ)**

ໃນກໍລະນີທີ່ຜູ້ສະເໜີລາຄາບໍ່ປະຕິບັດ ຫຼື ປະຕິບັດບໍ່ຖືກຕ້ອງຕາມຂໍ້ກໍານົດ, ກົດລະບຽບ, KPI, SLA ຫຼື ຂໍ້ບັງຄັບຂອງ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ, ບໍລິສັດ ຈະດໍາເນີນການຕາມລໍາດັບ ດັ່ງນີ້:

(1) ຄັ້ງທີໜຶ່ງ: ແຈ້ງເຕືອນດ້ວຍວາຈາ ຫຼື E-mail ເພື່ອໃຫ້ຜູ້ສະເໜີລາຄາດໍາເນີນການແກ້ໄຂ.

HONGSA
POWER

(2) ຄັ້ງທີສອງ: ອອກໜັງສືຕັກເຕືອນເປັນລາຍລັກອັກສອນ ແລະ ຜູ້ສະເໜີລາຄາຕ້ອງນຳສົ່ງມາດຕະການແກ້ໄຂ (Corrective Action Plan) ໃຫ້ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ພິຈາລະນາພາຍໃນ 7 ວັນ ນັບແຕ່ວັນທີ່ໄດ້ຮັບໜັງສື.

(3) ຖ້າຜູ້ສະເໜີລາຄາບໍ່ສົ່ງແຜນແກ້ໄຂ, ບໍ່ດຳເນີນການແກ້ໄຂ ຫຼື ຍັງຄົງມີການຜິດຊ້ຳອີກ, ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ມີສິດຫັກຄະແນນ KPI, ຫັກຄ່າບໍລິຫານຈັດການ ຫຼື ຄິດຄ່າປັບຕາມອັດຕາທີ່ກຳນົດໃນສັນຍາ.

(4) ກໍລະນີຍັງເພີກເສີຍ ຫຼື ການຜິດດັ່ງກ່າວສົ່ງຜົນກະທົບຕໍ່ຄວາມປອດໄພ, ການດຳເນີນງານ ຫຼື ຊື່ສຽງຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ , ບໍລິສັດ ມີສິດຄິດຄ່າປັບສູງສຸດບໍ່ເກີນ 10% ຂອງມູນຄ່າງວດວຽກ ຫຼື ມູນຄ່າການບໍລິການໃນເດືອນນັ້ນ, ແລະ ສະຫງວນສິດໃນການພິຈາລະນາບອກເລີກສັນຍາ ຕາມເງື່ອນໄຂສັນຍາ.

**ການຍົກເລີກສັນຍາ**

ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ມີສິດບອກເລີກສັນຍາໄດ້ຕາມຄວາມຈຳເປັນທາງທຸລະກິດໂດຍແຈ້ງໃຫ້ຜູ້ຮັບຈ້າງຮູ້ລ່ວງໜ້າບໍ່ໜ້ອຍກວ່າ 60 ວັນ.

ຄູ່ສັນຍາທັງ 2 ຝ່າຍມີສິດຍົກເລີກສັນຍາຈ້າງດັ່ງກ່າວໄດ້ໃນກໍລະນີທີ່ທັງ 2 ຝ່າຍຍິນຍອມ ແລະ ເຫັນພ້ອມກັນໃນການຍົກເລີກສັນຍາຈ້າງດັ່ງກ່າວ.

ຫາກຄູ່ສັນຍາຝ່າຍໃດຝ່າຍໜຶ່ງຜິດສັນຍາ ຄູ່ສັນຍາອີກຝ່າຍມີສິດບອກຍົກເລີກສັນຍາໂດຍຜູ້ທີ່ຜິດສັນຍາບໍ່ມີສິດຮຽກຮ້ອງຂໍຄ່າເສຍຫາຍໃດ ໆ ທີ່ເກີດຂຶ້ນ.

ໃນກໍລະນີຄູ່ສັນຍາຝ່າຍໃດຝ່າຍໜຶ່ງຜິດສັນຍາ ແລະ ເຮັດໃຫ້ເກີດຄວາມເສຍຫາຍຕໍ່ຄູ່ສັນຍາ ຄູ່ສັນຍາອີກຝ່າຍມີສິດຮ້ອງຂໍຄ່າເສຍຫາຍທີ່ເກີດຂຶ້ນ ກັບຄູ່ສັນຍາທີ່ຜິດສັນຍາ ຕາມຄ່າໃຊ້ຈ່າຍທີ່ເກີດຂຶ້ນຈິງ.

**ເງື່ອນໄຂກ່ຽວກັບການຈ້າງພະນັກງານຂັບລົດ**

ໃບສະເໜີລາຄາຕາມໂຄງສ້າງລາຄາໃນຕາຕາລາງ Excel ແນບທ້າຍ ທີ່ຜູ້ສະເໜີລາຄາຕ້ອງໄດ້ນຳສົ່ງໃສ່ຊອງລາຄາ ກຳນົດລາຍການທີ່ຈະຕ້ອງສະເໜີລາຄາເປັນ 2 ປະເພດ ຄື:

a) ປະເພດ ຫ້າມແກ້ໄຂລາຄາ (ຊ່ອງສີມ່ວງ) ເປັນລາຍການລາຄາທີ່ບໍລິສັດ ໄຟຟ້າ ຫົງສາ ຈຳກັດໄດ້ກຳນົດໃຫ້ໄວ້ເປັນລາຄາສະເຫຼ່ຍ ເຊິ່ງລາຍການລາຄາປະເພດນີ້ເປັນລາຄາທີ່ບໍລິສັດ ໄຟຟ້າ ຫົງສາ ຈຳກັດຈະໄດ້ຈ່າຍໃຫ້ຜູ້ສະເໜີລາຄາຕາມຕົວຈິງທີ່ຜູ້ສະເໜີລາຄາໄດ້ເຮັດສັນຍາຈ້າງແຮງງານກັບພະນັກງານຂັບລົດ. ພາຍຫຼັງໄດ້ຜົນການປະມູນແລ້ວ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ແລະ ຜູ້ສະເໜີລາຄາທີ່ເປັນຜູ້ຊະນະການປະມູນ ຕ້ອງໄດ້ມາຮ່ວມກັນຕົກລົງຈຳນວນຕົວຈິງຂອງລາຄາປະເພດນີ້ອີກຄັ້ງກ່ອນທີ່ຈະໄດ້ເຮັດສັນຍາຈ້າງເໝົາລະຫວ່າງກັນ.

b) ປະເພດ ອະນຸຍາດໃຫ້ສະເໜີລາຄາ (ຊ່ອງສີເຫຼືອງ) ເປັນລາຍການຄ່າບໍລິຫານຈັດການທີ່ຜູ້ສະເໜີລາຄາສາມາດສະເໜີລາຍການຄ່າໃຊ້ຈ່າຍໄດ້ຕາມທີ່ຜູ້ສະເໜີລາຄາເຫັນສົມຄວນ ແລະ ສາມາດເພີ່ມເຕີມລາຍການຄ່າໃຊ້ຈ່າຍອື່ນໆ ທີ່ແຕກຕ່າງຈາກທີ່ໄດ້ກຳນົດເປັນພື້ນຖານໄດ້.

c) ການເຮັດສັນຍາຈ້າງລະຫວ່າງຜູ້ສະເໜີລາຄາກັບພະນັກງານຂັບລົດ ຕ້ອງໄດ້ຕົກລົງເງິນເດືອນພື້ນຖານ ແລະ ຄ່າໃຊ້ຈ່າຍອື່ນໆ ເປັນສະກຸນເງິນບາດ ແລະ ຕ້ອງຈ່າຍເງິນທັງໝົດເປັນສະກຸນເງິນກີບ ໂດຍໃຊ້ວິທີຄິດໄລ່ອັດຕາແລກປ່ຽນຄືກັນກັບວິທີຄິດໄລ່ຄ່າຈ້າງລະຫວ່າງບໍລິສັດ ໄຟຟ້າ ຫົງສາ ຈຳກັດ ແລະ ຜູ້ສະເໜີລາຄາ.

ເງິນເດືອນພື້ນຖານຂອງພະນັກງານຂັບລົດທີ່ເຮັດວຽກຢູ່ໃນເມືອງຫົງສາ ເຊິ່ງຜູ້ສະເໜີລາຄາກັບພະນັກງານຂັບລົດຈະໄດ້ຕົກລົງກຳນົດໃສ່ໄວ້ໃນສັນຍາຈ້າງແຮງງານລະຫວ່າງກັນຕາມກົດໝາຍແຮງງານກຳນົດ.

d) ຄ່າລ່ວງເວລາຂອງພະນັກງານຂັບລົດແຕ່ລະຄົນຈະຄິດໄລ່ຈາກເງິນເດືອນພື້ນຖານຕົວຈິງທີ່ຜູ້ສະເໜີລາຄາຕົກລົງເຮັດສັນຍາຈ້າງແຮງງານກັບພະນັກງານຂັບລົດ.

e) ເງິນເດືອນພື້ນຖານແລະຄ່າລ່ວງເວລາຂອງພະນັກງານຂັບລົດທັງສອງສ່ວນນີ້ ຜູ້ສະເໜີລາຄາຕ້ອງຈ່າຍໃຫ້ພະນັກງານຂັບລົດເຕັມຈຳນວນທີ່ໄດ້ຄິດໄລ່ໂດຍໄມ່ຫັກຄ່າບໍລິຫານຈັດການໃດໆ ຍົກເວັ້ນ ຫັກຄ່າພາສີ-ອາກອນ ຄ່າປະກັນສັງຄົມ ຫຼື ຄ່າໃຊ້ຈ່າຍອື່ນໆ ທີ່ກົດໝາຍກຳນົດ.

f) ເພື່ອກວດສອບການຈັດຕັ້ງປະຕິບັດ ບໍລິສັດມີສິດເຂົ້າກວດສອບການຈ່າຍເງິນຄ່າຈ້າງລວມເຖິງການໃຫ້ ສິດ ແລະ ຜົນປະໂຫຍດອື່ນໆ ທີ່ຜູ້ສະເໜີລາຄາຈະໃຫ້ກັບພະນັກງານຂັບລົດ ໂດຍບໍລິສັດຈະແຈ້ງລ່ວງໜ້າບໍ່ນ້ອຍກວ່າ 3 ວັນ ກ່ອນຈະໄດ້ລົງກວດກາຂໍ້ມູນ ຫຼື ສົ່ງຂໍ້ມູນ.

ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ມີສິດເຂົ້າກວດສອບ ຫຼື ມອບໝາຍໃຫ້ບຸກຄົນອື່ນເຂົ້າກວດສອບບັນຊີ, ເອກະສານການຈ່າຍເງິນເດືອນ, ການຈ່າຍອາກອນ, ການຈ່າຍປະກັນສັງຄົມ, ເອກະສານ OT ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງກັບສັນຍາໄດ້ຕະຫຼອດໄລຍະສັນຍາ.

ຖ້າຫາກບໍລິສັດ ໄຟຟ້າ ຫົງສາ ຈຳກັດກວດສອບແລ້ວພົບວ່າ ຜູ້ສະເໜີລາຄາບໍ່ໄດ້ຈັດຕັ້ງປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນຂໍ້ນີ້ ບໍລິສັດ ໄຟຟ້າ ຫົງສາ ຈຳກັດມີສິດທີ່ຈະສະເໜີໃຫ້ຜູ້ສະເໜີລາຄາປັບປຸງແກ້ໄຂໃຫ້ຖືກຕ້ອງດ້ວຍຄ່າໃຊ້ຈ່າຍຂອງຜູ້ສະເໜີລາຄາເອງ ແຕ່ຖ້າຫາກວ່າຜູ້ສະເໜີລາຄາຍັງບໍ່ສາມາດແກ້ໄຂບັນຫາທີ່ເກີດຂຶ້ນໄດ້ພາຍໃນກຳນົດ 15 ວັນ ບໍລິສັດ ໄຟຟ້າ ຫົງສາ ຈຳກັດມີສິດຍົກເລີກສັນຍາສະບັບນີ້ໄດ້ທັນທີ ໂດຍທີ່ຜູ້ສະເໜີລາຄາບໍ່ມີສິດຮຽກຮ້ອງຄ່າເສຍຫາຍໃດໆ.

g) ການຈ່າຍເງິນໂບນັດໃຫ້ພະນັກງານຂັບລົດ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ຈະຈ່າຍໃນກໍລະນີທີ່ພະນັກງານຂັບລົດປະຕິບັດວຽກຄົບ 12 ເດືອນ ໂດຍໃຫ້ຜູ້ສະເໜີລາຄາດຳເນີນການຂໍເບີກຈ່າຍໃນງວດທີ່ມີພະນັກງານຂັບລົດປະຕິບັດວຽກຄົບ 12 ເດືອນໃນເດືອນນັ້ນ ພ້ອມທັງແນບລາຍຊື່ປະກອບການຂໍ້ມູນການຂໍເບີກຈ່າຍດ້ວຍ.

NNN Building 4th Floor/Room No. D5, Boulichan Road, Phonsinouan Village,
Sisattanark District, Vientiane Capital, Lao PDR.
Tel: + 856 21 223911, 222315, 222482, 219381
Fax: + 856 21 222089

Phonchanh Office, Hongsa District, Xayaboury Province, Lao PDR.
Tel: + 856 74 266121 – 29
Fax: + 856 74 266120

h) ການຈ່າຍເງິນຄ່າຊົດເຊີຍກໍລະນີຄົບກໍານົດສັນຍາຈ້າງງານ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ຈະຈ່າຍໃຫ້ແກ່ພະນັກງານທີ່ປະຕິບັດວຽກຄົບ 36 ເດືອນ ໂດຍຈ່າຍຜ່ານຜູ້ສະເໜີລາຄາ ແລະ ໃຫ້ຜູ້ສະເໜີລາຄາຈັດເຮັດໜັງສືສະຫຼຸບຍອດຈໍານວນເງິນທີ່ຂໍເບີກ ໃນງວດສຸດທ້າຍຂອງການໃຫ້ບໍລິການໂດຍໃຊ້ໃບສະເໜີລາຄາ ແລະ ຫຼັກຖານການຈ່າຍເງິນເດືອນ ເປັນການອ້າງອີງໃນການຈ່າຍ ທັງນີ້ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດຂອງສະຫງວນສິດໃນການພິຈາລະນາ.

**ການຮັບຜິດຊອບກໍລະນີອຸບັດເຫດຈາກຄວາມຜິດຂອງພະນັກງານຂັບລົດ**

ໃນກໍລະນີທີ່ພະນັກງານຂັບລົດຂອງຜູ້ສະເໜີລາຄາເກີດອຸບັດເຫດ ແລະ ການສອບສວນພົບວ່າມີການດື່ມເຫຼົ້າ, ສານເສບຕິດ, ນໍາລົດໄປໃຊ້ສ່ວນຕົວ ຫຼື ການກະທໍາອື່ນທີ່ຜ່າຝືນລະບຽບຂອງ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ, ຜູ້ສະເໜີລາຄາຕ້ອງຮັບຜິດຊອບຄ່າສ້ອມແປງຄວາມເສຍຫາຍ ແລະ ຄ່າໃຊ້ຈ່າຍທີ່ເກີດຂຶ້ນທັງໝົດ.

ຜູ້ສະເໜີລາຄາຕ້ອງນໍາລົດຄັນດັ່ງກ່າວເຂົ້າສ້ອມແປງ ແລະ ຟື້ນຟູໃຫ້ຢູ່ໃນສະພາບປອດໄພ ແລະ ພ້ອມໃຊ້ງານຕາມມາດຕະຖານຂອງ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ .

ນອກຈາກນັ້ນ ຜູ້ສະເໜີລາຄາຕ້ອງຈັດຫາລົດທົດແທນທີ່ມີສະພາບປອດໄພ, ຖືກຕ້ອງຕາມກົດໝາຍ ແລະ ມີປະເພດຫຼືສະມັດຖະນະບໍ່ຕໍ່າກວ່າລົດຄັນເດີມ ມາໃຫ້ບໍລິການທົດແທນ ຕັ້ງແຕ່ວັນທີ່ເກີດອຸບັດເຫດ ຫຼື ບໍ່ເກີນ 24 ຊົ່ວໂມງ ຫຼັງຈາກເກີດເຫດ.

ຄ່າໃຊ້ຈ່າຍໃນການສ້ອມແປງ, ຄ່າລົດທົດແທນ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ກ່ຽວຂ້ອງ ຜູ້ສະເໜີລາຄາຈະຕ້ອງເປັນຜູ້ຮັບຜິດຊອບເອງທັງໝົດ ໂດຍບໍ່ສາມາດນໍາມາຮຽກຮ້ອງ ຫຼື ຄິດໄລ່ເພີ່ມເຕີມຈາກ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ ໄດ້.

ຜູ້ສະເໜີລາຄາ ຕ້ອງຊົດເຊີຍ ແລະ ຮັບຜິດຊອບຕໍ່ຄວາມເສຍຫາຍ, ຄ່າປັບໃໝ, ຄ່າທໍານຽມ, ຄ່າທະນາຍຄວາມ, ການຟ້ອງຮ້ອງ ຫຼື ຄ່າໃຊ້ຈ່າຍໃດໆ ທີ່ເກີດຈາກການຜ່າຝືນກົດໝາຍ, ການລະເມີດສັນຍາ ຫຼື ການກະທໍາຂອງພະນັກງານຂອງຜູ້ສະເໜີລາຄາ.



NNN Building 4th Floor/Room No. D5, Boulichan Road, Phonsinouan Village,
Sisattanark District, Vientiane Capital, Lao PDR.
Tel: + 856 21 223911, 222315, 222482, 219381
Fax: + 856 21 222089

Phonchanh Office, Hongsa District, Xayaboury Province, Lao PDR.
Tel: + 856 74 266121 – 29
Fax: + 856 74 266120

HONGSA POWER

# ແລະ ຕົວຊີ້ວັດຜົນງານຫຼັກ (KPI)
# ສຳລັບສັນຍາຈ້າງເໝົາບໍລິການພະນັກງານຂັບລົດ

1. ຈຸດປະສົງ

ເອກະສານສະບັບນີ້ກຳນົດລະດັບການໃຫ້ບໍລິການ, ຕົວຊີ້ວັດ, ວິທີວັດແທກ, ຫຼັກຖານ, ຄວາມຖີ່ໃນການປະເມີນ ແລະ ມາດຕະການເມື່ອຜົນງານບໍ່ບັນລຸເປົ້າໝາຍ ເພື່ອຄວບຄຸມການບໍລິການພະນັກງານຂັບລົດໃຫ້ມີຄວາມປອດໄພ, ຕໍ່ເນື່ອງ, ທັນເວລາ ແລະ ສອດຄ່ອງກັບ TOR, ສັນຍາ, ກົດລະບຽບ SHEQ ແລະ ຄູ່ມືການບໍລິຫານພະນັກງານ Outsource ຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ .

2. **ຫຼັກການປະເມີນ**

- ປະເມີນຜົນເປັນປະຈຳທຸກເດືອນ ແລະ ສະຫຼຸບຜົນປະຈຳປີ.
- ຜູ້ຮັບຈ້າງຕ້ອງນຳສົ່ງຂໍ້ມູນ ແລະ ຫຼັກຖານທີ່ຖືກຕ້ອງ, ຄົບຖ້ວນ ແລະ ກວດສອບໄດ້.
- ກໍລະນີບໍ່ມີຫຼັກຖານຢືນຢັນ ໃຫ້ຖືວ່າບໍ່ບັນລຸຕົວຊີ້ວັດນັ້ນ.
- ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ມີສິດກວດສອບຂໍ້ມູນ, ສຸ່ມກວດ, ສຳພາດ, ກວດໜ້າງານ ແລະ ຮ້ອງຂໍເອກະສານເພີ່ມເຕີມ.
- ເຫດການດຽວທີ່ກະທົບຫຼາຍຕົວຊີ້ວັດ ສາມາດຖືກຫັກຄະແນນໃນແຕ່ລະຫົວຂໍ້ທີ່ກ່ຽວຂ້ອງ.
- ກໍລະນີຕົວຊີ້ວັດໃດໜຶ່ງເປັນ Event-based KPI ແລະ ໃນເດືອນນັ້ນບໍ່ມີເຫດການເກີດຂຶ້ນ ໃຫ້ບັນທຶກເປັນ N/A ແລະ ບໍ່ນຳນ້ຳໜັກຂອງຂໍ້ນັ້ນມາຄຳນວນຄະແນນໃນເດືອນນັ້ນ. ຄະແນນລວມໃຫ້ປັບຖ່ວງນ້ຳໜັກຈາກຕົວຊີ້ວັດທີ່ສາມາດປະເມີນໄດ້ຈິງໃຫ້ເທົ່າກັບ 100%.

KPI/SLA ດ້ານຄວາມພ້ອມ ແລະ ຄວາມຕໍ່ເນື່ອງຂອງບໍລິການ 28%

| ລ/ດ | ຕົວຊີ້ວັດ KPI / SLA | ເປົ້າໝາຍ | ວິທີວັດແທກ / ຫຼັກຖານ | ຄວາມຖີ່ | ນ້ຳໜັກ |
|---|---|---|---|---|---|
| 1 | ຄວາມພ້ອມຂອງພະນັກງານຂັບລົດ | ≥ 99% | ກວດຈາກ Face Scan ໂດຍຈຳນວນຜູ້ສະແກນຕ້ອງກົງກັບຈຳນວນຜູ້ມາເຮັດວຽກຈິງ. ຫາກບໍ່ໄດ້ສະແກນ ຕ້ອງມີລາຍງານເຫດຜົນພ້ອມຫຼັກຖານ ແລະ ສົ່ງກ່ອນເວລາ 09:00 ໂມງຂອງທຸກມື້ ລວມທັງວັນພັກ. | ລາຍວັນ/ລາຍເດືອນ | 7% |

NNN Building 4th Floor/Room No. D5, Boulichan Road, Phonsinouan Village, Sisattanark District, Vientiane Capital, Lao PDR.
Tel: + 856 21 223911, 222315, 222482, 219381
Fax: + 856 21 222089

Phonchanh Office, Hongsa District, Xayaboury Province, Lao PDR.
Tel: + 856 74 266121 – 29
Fax: + 856 74 266120

| | | | | | |
|---|---|---|---|---|---|
| 2 | ການຈັດພະນັກງານເຂົ້າແທນກໍລະນີລາລ່ວງໜ້າ | 100% | ກວດຈາກໃບລາລ່ວງໜ້າ, ແຜນຈັດຄົນທົດແທນ, ລາຍຊື່ຜູ້ເຂົ້າແທນ ແລະ ຫຼັກຖານການຢືນຢັນກ່ອນມື້ປະຕິບັດວຽກ. | ທຸກກໍລະນີ/ ລາຍເດືອນ | 5% |
| 3 | ການຈັດພະນັກງານເຂົ້າແທນກໍລະນີສຸກເສີນ | 100% ພາຍໃນ 09:00 ໂມງ ຫຼື ບໍ່ເກີນ 2 ຊົ່ວໂມງຫຼັງຮັບແຈ້ງ | ບັນທຶກເວລາແຈ້ງ, ເວລາມາຮອດ, ລາຍຊື່ຜູ້ເຂົ້າແທນ, Face Scan ແລະ ຫຼັກຖານການຮັບຮອງຈາກ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ . | ທຸກເຫດການ/ ລາຍເດືອນ | 5% |
| 4 | ການຈັດລົດຮັບ-ສົ່ງພະນັກງານຢ່າງພຽງພໍ ແລະ ກົງເວລາ | 100% ຕາມແຜນ 05:00-24:00 ໂມງ | ກວດຈາກແຜນເດີນລົດ, ບັນທຶກເວລາອອກ-ຮອດ, GPS/ໃບບັນທຶກ ແລະ ຂໍ້ຮ້ອງຮຽນຈາກຜູ້ໃຊ້ບໍລິການ. | ລາຍວັນ/ ລາຍເດືອນ | 4% |
| 5 | ການສົ່ງຂໍ້ມູນການກວດເຊັກລົດກ່ອນເລີ່ມວຽກ | 100% ຄົບທຸກຫົວຂໍ້ ແລະ ບໍ່ມີຄວາມຜິດພາດ | ກວດຈາກລາຍງານການກວດເຊັກລົດຂອງພະນັກງານຂັບລົດທຸກຄົນ ໃນຕອນເຊົ້າກ່ອນເລີ່ມວຽກ ໂດຍຕ້ອງກວດຄົບທຸກຫົວຂໍ້ ແລະ ຂໍ້ມູນຖືກຕ້ອງ. | ລາຍວັນ/ ລາຍເດືອນ | 4% |
| 6 | ການທໍາຄວາມສະອາດລົດກ່ອນເລີ່ມວຽກ | 100% ຂອງພະນັກງານຂັບລົດທຸກຄົນ | ກວດຈາກບັນທຶກ/ຮູບຖ່າຍການທໍາຄວາມສະອາດລົດກ່ອນເລີ່ມວຽກ ແລະ ການສຸ່ມກວດໜ້າງານໂດຍ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ . | ລາຍວັນ/ ລາຍເດືອນ | 3% |

KPI/SLA ດ້ານການບໍລິຫານບຸກຄະລາກອນ 30%

| ລ/ດ | ຕົວຊີ້ວັດ KPI / SLA | ເປົ້າໝາຍ | ວິທີວັດແທກ / ຫຼັກຖານ | ຄວາມຖີ່ | ນໍ້າໜັກ |
|---|---|---|---|---|---|
| 1 | ຄວາມຄົບຖ້ວນຂອງເອກະສານ ແລະ ຄຸນສົມບັດພະນັກງານໃໝ່ | 100% ກ່ອນເລີ່ມວຽກ | ກວດຈາກ CV, ໃບຂັບຂີ່, ບັດປະຈໍາຕົວ, ສໍາມະໂນຄົວ, ໃບແຈ້ງໂທດ, ໃບຮັບຮອງແພດ, ຜົນກວດສານເສບຕິດ, ຫຼັກຖານການອົບຮົມ/ທົດສອບ ແລະ ການຮັບຮອງຈາກ ບໍລິສັດ ໄຟຟ້າ ຫົງສາ ຈໍາກັດ . | ກ່ອນເລີ່ມວຽກ/ ລາຍເດືອນ | 6% |
| 2 | ຄວາມສາມາດໃນການຈັດພະນັກງານໃໝ່ເຂົ້າທົດ | 100% ພາຍໃນກໍານົດ | ກວດຈາກໃບລາອອກ, ແຜນສັນຫາ/ຈັດຄົນທົດແທນ, ລາຍຊື່ພະນັກງານໃໝ່, ເອກະສານ | ທຸກກໍລະນີ/ລາຍເດືອນ | 6% |

| | | | | | |
|---|---|---|---|---|---|
| | ແທນພະນັກງານເກົ່າທີ່ລາອອກ | | ຄຸນສົມບັດຄົບຖ້ວນ ແລະ ຫຼັກຖານວ່າບໍ່ກະທົບຕໍ່ການບໍລິການ. | | |
| 3 | ການຈັດການໃບແຈ້ງເຕືອນເມື່ອມີຂໍ້ຮ້ອງຮຽນຈາກຜູ້ໃຊ້ບໍລິການ | 100% ຕາມຂັ້ນຕອນ | ກວດຈາກບັນທຶກຂໍ້ຮ້ອງຮຽນ, ຜົນການສອບສວນ, ໃບແຈ້ງເຕືອນ, ແຜນແກ້ໄຂ, ຫຼັກຖານການຊີ້ແຈງພະນັກງານ ແລະ ການຕິດຕາມປິດປະເດັນ. | ທຸກກໍລະນີ/ລາຍເດືອນ | 6% |
| 4 | ການຈັດການຂໍ້ຮ້ອງຮຽນຂອງພະນັກງານຂັບລົດ | 100% ຮັບເລື່ອງ ແລະ ແກ້ໄຂຕາມກຳນົດ | ກວດຈາກບັນທຶກການຮັບເລື່ອງຮ້ອງຮຽນ, ການວິເຄາະສາເຫດ, ແຜນແກ້ໄຂ, ການສື່ສານກັບພະນັກງານຂັບລົດ ແລະ ຫຼັກຖານການປິດຂໍ້ຮ້ອງຮຽນໂດຍບໍ່ໃຫ້ກະທົບຕໍ່ການບໍລິການ. | ທຸກກໍລະນີ/ລາຍເດືອນ | 6% |
| 5 | ການຈັດການການຂາດວຽກ ແລະ ການລາຂອງພະນັກງານ ໃນຊ່ວງເທດສະການ ຫຼື ກິດຈະກຳຊຸມຊົນ | 100% ມີແຜນຮອງຮັບ ແລະ ບໍ່ກະທົບບໍລິການ | ກວດຈາກແຜນກຳລັງຄົນລ່ວງໜ້າ, ແຜນຄວບຄຸມການຂາດ/ການລາ, ລາຍຊື່ພະນັກງານສຳຮອງ, ການແຈ້ງເຕືອນກ່ອນຊ່ວງເທດສະການ ຫຼື ກິດຈະກຳຊຸມຊົນ ແລະ ຫຼັກຖານວ່າມີພະນັກງານພ້ອມປະຈຳວຽກຕາມແຜນ. | ກ່ອນຊ່ວງເທດສະການ/ທຸກກິດຈະກຳ/ລາຍເດືອນ | 6% |

**KPI/SLA ດ້ານຄວາມປອດໄພ ແລະ SHEQ 30%**

| ລ/ດ | ຕົວຊີ້ວັດ KPI / SLA | ເປົ້າໝາຍ | ວິທີວັດແທກ / ຫຼັກຖານ | ຄວາມຖີ່ | ນ້ຳໜັກ |
|---|---|---|---|---|---|
| 1 | ອຸບັດເຫດທີ່ປ້ອງກັນໄດ້ | ບໍ່ເກີນ 7 ຄັ້ງ/ປີ | ກວດຈາກທະບຽນ Accident/Near Miss, ຜົນການສອບສວນ ແລະ ການຮັບຮອງຈາກ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ . | ລາຍເດືອນ/ປີ | 5% |
| 2 | ອຸບັດເຫດຈາກຄວາມຜິດຂອງພະນັກງານ, ການນຳລົດໄປໃຊ້ສ່ວນຕົວ, ການຂັບຂີ່ພາຍໃຕ້[illegible]ິດເຫຼົ້າ ຫຼື ສານເສບຕິດ | 0 ຄັ້ງ | ກວດຈາກຜົນສອບສວນ, ຫຼັກຖານການໃຊ້ລົດ, ຜົນກວດເຫຼົ້າ/ສານເສບຕິດ ແລະ ລາຍງານວິໄນ. | ທຸກເຫດການ | 5% |
| 3 | ການແຈ້ງເຫດ, ສອບສວນເຄສ ແລະ ຈັດທຳແຜນປ້ອງກັນອຸບັດເຫດຕາມຂໍ້ກຳນົດ | ແຈ້ງທັນທີ; ລາຍງານເບື້ອງຕົ້ນ ≤ 24 ຊົ່ວໂມງ; ລາຍ | ກວດຈາກເວລາແຈ້ງເຫດ, ເວລາທີ່ຜູ້ຮັບຜິດຊອບໄປຮອດຈຸດເກີດເຫດໂດຍໄວ, ແບບຟອມລາຍງານ, ບົດສອບສວນ, | ທຸກເຫດການ | 5% |

| | | | | | |
|---|---|---|---|---|---|
| | | ງານສົມບູນ ≤ 7 ວັນ | ແຜນປ້ອງກັນ/Corrective Action ແລະ ຫຼັກຖານການປິດເຄສ. | | |
| 4 | ການຝຶກອົບຮົມ ແລະ ພັດທະນາທັກສະພະນັກງານໃໝ່ | 100% ກ່ອນເລີ່ມວຽກ | ກວດຈາກແຜນຝຶກອົບຮົມ, ລາຍຊື່ຜູ້ເຂົ້າຮຽນ, ຜົນທົດສອບ, ໃບຮັບຮອງ ແລະ ການອະນຸມັດໃຫ້ເລີ່ມວຽກຈາກ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ . | ກ່ອນເລີ່ມວຽກ/ລາຍເດືອນ | 4% |
| 5 | ການປະຕິບັດຕາມ SHEQ ແລະ ການບໍລິຫານຈັດການດ້ານສິ່ງແວດລ້ອມ | 100%; ບໍ່ມີ Major NC | ກວດຈາກ Inspection Checklist, ຜົນກວດໜ້າງານ, Warning Letter, ຫຼັກຖານການຈັດການຂອງເສຍ/ນ້ຳເສຍ ແລະ ບັນທຶກປິດປະເດັນ. | ລາຍເດືອນ | 4% |
| 6 | ການດູແລຈຸດລ້າງລົດ | 100% ສະອາດ, ເປັນລະບຽບ ແລະ ປອດໄພ | ກວດຈາກຜົນກວດ 5S, ຮູບຖ່າຍຈຸດລ້າງລົດ, ບັນທຶກການກຳຈັດນ້ຳເສຍ/ຂອງເສຍ ແລະ ການສຸ່ມກວດໂດຍ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ . | ລາຍເດືອນ | 3% |
| 7 | ການດຳເນີນຕາມແຜນຫຼຸດອຸບັດເຫດ ແລະ ການດຳເນີນ CAPA ຕາມແຜນ | 100% ຕາມແຜນ ແລະ ປິດ CAPA ຕາມກຳນົດ | ກວດຈາກແຜນຫຼຸດອຸບັດເຫດ, CAPA Register, ສະຖານະການດຳເນີນງານ, ຫຼັກຖານການປິດປະເດັນ ແລະ ລາຍງານຕິດຕາມປະຈຳເດືອນ. | ລາຍເດືອນ/ທຸກ CAPA | 4% |

KPI/SLA ດ້ານອື່ນໆ 12%

| ລ/ດ | ຕົວຊີ້ວັດ KPI / SLA | ເປົ້າໝາຍ | ວິທີວັດແທກ / ຫຼັກຖານ | ຄວາມຖີ່ | ນ້ຳໜັກ |
|---|---|---|---|---|---|
| 1 | ການກວດສຸຂະພາບປະຈຳປີ | 100% | ກວດຈາກແຜນກວດສຸຂະພາບ, ລາຍຊື່ຜູ້ເຂົ້າກວດ, ຜົນກວດ ແລະ ຫຼັກຖານການນຳສົ່ງຜົນໃຫ້ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ . | ປະຈຳປີ/ລາຍເດືອນ | 2% |
| 2 | ການກວດສານເສບຕິດ | 100% | ກວດຈາກລາຍຊື່ຜູ້ເຂົ້າກວດ, ຜົນກວດສານເສບຕິດ, ບັນທຶກການກວດສຸ່ມ ແລະ ລາຍງານຜົນການກວດ. | ປະຈຳປີ/ຕາມການສຸ່ມກວດ | 2% |
| 3 | ການຈັດທຳປະກັນອຸບັດເຫດສ່ວນບຸກຄົນ | 100% | ກວດຈາກກົມມະທັນປະກັນ, ລາຍຊື່ຜູ້ໄດ້ຮັບຄວາມຄຸ້ມຄອງ, ວັນທີ່ມີຜົນບັງຄັບໃຊ້ ແລະ ຫຼັກຖານການຕໍ່ອາຍຸ. | ກ່ອນເລີ່ມວຽກ/ລາຍປີ | 2% |

| | | | | | |
|---|---|---|---|---|---|
| 4 | ການລາຍງານຜົນການດຳເນີນງານປະຈຳເດືອນ | 100% ຖືກຕ້ອງ ແລະ ທັນເວລາ | ກວດຈາກລາຍງານປະຈຳເດືອນ, KPI/SLA Report, ຂໍ້ມູນປະກອບ ແລະ ຫຼັກຖານການສົ່ງມອບຕາມກຳນົດ. | ລາຍເດືອນ | 2% |
| 5 | ການປະຕິບັດຕາມແຜນງານທີ່ນຳສະເໜີ | 100% ຕາມແຜນ | ກວດຈາກແຜນງານທີ່ນຳສະເໜີ, ແຜນດຳເນີນງານ, ສະຖານະຄວາມຄືບໜ້າ ແລະ ຫຼັກຖານການດຳເນີນງານຈິງ. | ລາຍເດືອນ/ ຕາມແຜນ | 3% |
| 6 | ການຝຶກອົບຮົມພະນັກງານຕາມແຜນປະຈຳປີ | 100% ຕາມແຜນ | ກວດຈາກແຜນຝຶກອົບຮົມປະຈຳປີ, ລາຍຊື່ຜູ້ເຂົ້າອົບຮົມ, ຜົນການທົດສອບ, ໃບຮັບຮອງ ແລະ ລາຍງານສະຫຼຸບການຝຶກອົບຮົມ. | ລາຍປີ/ຕາມແຜນ | 1% |

## 3. ຫຼັກເກນການໃຫ້ຄະແນນ

| ຄະແນນ | ຄຳອະທິບາຍ |
|---|---|
| 5 | ບັນລຸ ຫຼື ດີກວ່າເປົ້າໝາຍ ແລະ ມີຫຼັກຖານຄົບຖ້ວນ |
| 4 | ບັນລຸ 95%-99.99% ຂອງເປົ້າໝາຍ ຫຼື ມີຂໍ້ບົກພ່ອງເລັກນ້ອຍ |
| 3 | ບັນລຸ 90%-94.99% ຂອງເປົ້າໝາຍ ແລະ ມີແຜນແກ້ໄຂ |
| 2 | ບັນລຸ 80%-89.99% ຫຼື ຜິດ SLA 1 ຄັ້ງ |
| 1 | ບັນລຸຕ່ຳກວ່າ 80% ຫຼື ຜິດ SLA ຊ້ຳ |
| 0 | ບໍ່ດຳເນີນການ, ບໍ່ມີຫຼັກຖານ, ປົກປິດ/ບິດເບືອນຂໍ້ມູນ ຫຼື ເກີດ Critical Breach |

ຄະແນນຖ່ວງນ້ຳໜັກ = (ຄະແນນທີ່ໄດ້ ÷ 5) × ນ້ຳໜັກຂອງຕົວຊີ້ວັດ

## 4. ຜົນປະເມີນລວມ

| ຄະແນນລວມ | ລະດັບ | ມາດຕະການ |
|---|---|---|
| 95-100 | ດີເລີດ | ຈ່າຍຄ່າບໍລິຫານຕາມສັນຍາ |
| 90-94.99 | ດີຫຼາຍ | ຈ່າຍຄ່າບໍລິຫານຕາມສັນຍາ |

HONGSA POWER

| | | |
|---|---|---|
| 80-89.99 | ຕ້ອງປັບປຸງ | ສົ່ງ Corrective Action Plan ແລະ ຕິດຕາມລາຍອາທິດ |
| 70-79.99 | ບໍ່ເປັນທີ່ພໍໃຈ | ອອກໜັງສືແຈ້ງເຕືອນ ແລະ ດຳເນີນການຕາມສັນຍາ |
| <70 | ບໍ່ຜ່ານ | ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ສະຫງວນສິດຫັກຄ່າບໍລິຫານ/ດຳເນີນການຕາມສັນຍາ |

## 5. ການລະເມີດຮ້າຍແຮງທີ່ຕ້ອງດຳເນີນການທັນທີ

- ການນຳພະນັກງານທີ່ບໍ່ຜ່ານການອົບຮົມ, ບໍ່ມີໃບຂັບຂີ່ຖືກຕ້ອງ ຫຼື ບໍ່ໄດ້ຮັບການຮັບຮອງຈາກ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ເຂົ້າເຮັດວຽກ.
- ການປອມແປງເວລາເຂົ້າ-ອອກວຽກ, ລອມສິດ, ປອມເອກະສານ ຫຼື ບິດເບືອນຂໍ້ມູນ.
- ການຝ່າຝືນ Golden Rules, SHEQ ຫຼື ຄຳສັ່ງຢຸດງານຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ .
- ການປົກປິດອຸບັດເຫດ, ແຈ້ງເຫດລ່າຊ້າ ຫຼື ບໍ່ຮ່ວມສືບສວນ.
- ການປ່ອຍໃຫ້ບຸກຄົນທີ່ມີຜົນກວດສານເສບຕິດເປັນບວກ ຫຼື ບໍ່ມີຄວາມພ້ອມດ້ານສຸຂະພາບເຂົ້າຂັບລົດ.

## 6.ມາດຕະການເມື່ອບໍ່ບັນລຸ KPI/SLA

- ຜູ້ຮັບຈ້າງຕ້ອງວິເຄາະສາເຫດ ແລະ ສົ່ງ Corrective Action Plan ພາຍໃນເວລາທີ່ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ກຳນົດ.
- ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ສາມາດອອກໜັງສືແຈ້ງເຕືອນ, ຫັກຄະແນນ KPI/SLA, ຫັກຄ່າບໍລິຫານຈັດການ ຫຼື ດຳເນີນການຕາມສັນຍາ.
- ຖ້າຜູ້ຮັບຈ້າງບໍ່ສາມາດຈັດຫາລົດທົດແທນໄດ້, ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ມີສິດເຊົ່າລົດທົດແທນ ແລະ ຫັກຄ່າເຊົ່າຈາກຄ່າບໍລິຫານຈັດການປະຈຳເດືອນ.
- ການດຳເນີນມາດຕະການດັ່ງກ່າວບໍ່ຕັດສິດຂອງ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ໃນການຮຽກຮ້ອງຄ່າເສຍຫາຍ ຫຼື ໃຊ້ສິດອື່ນຕາມສັນຍາ.

## 7. ແບບສະຫຼຸບຜົນປະຈຳເດືອນ

| ເດືອນ/ປີ | ຄະແນນລວມ | ລະດັບຜົນງານ | ຈຳນວນປະເດັນຄ້າງ |
|---|---|---|---|

| | | | |
|---|---|---|---|
| | | | |

ຜູ້ຈັດທຳ: ____________________ ຜູ້ກວດສອບ: ____________________

ຜູ້ອະນຸມັດ: ____________________

15. ໝາຍເຫດການນຳໃຊ້

ເປົ້າໝາຍ, ນ້ຳໜັກ, ມາດຕະການຫັກຄ່າບໍລິຫານ ແລະ ກຳນົດເວລາທີ່ລະບຸໃນເອກະສານນີ້ ຄວນໄດ້ຮັບການທົບທວນ ແລະ ອະນຸມັດຈາກຄະນະກຳມະການຈັດຊື້ຈັດຈ້າງ, ຝ່າຍກົດໝາຍ, ໜ່ວຍງານຜູ້ຮັບຜິດຊອບສັນຍາ ກ່ອນນຳໄປຜູກພັນໃນສັນຍາ.